ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*********

ສະຖາບັນຄົ້ນຄ້ວາວິທະຍາສາດເຕັກນິກກະສິກຳ ແລະ ປ່າໄມ້

ສູນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ພາກເໜືອ

# ບົດລາຍງານ

## ກອງປະຊຸມການວາງແຜນດຳເນີນງານຂອງສູນບໍລິການເຕັກນິກກຸ່ມບ້ານ

## ຢູ່ທີ່ ຫ້ອງການປະສານງານເມືອງໂພນໄຊ



ທີມງານຂໍ້ມູນຂ່າວສານ

ເດືອນກຸມພາ,2009

# ສາລະບານ


**1.** ພາກສະເໜີ ..... 3

1.1 ສະພາບລວມ ..... 3

1.2 ຈຸດປະສົງ ..... 3

1.3 ຂັ້ນຕອນ ແລະ ຜູ້ເຂົ້າຮ່ວມ ..... 3

**2.** ການສະເໜີກ່ຽວກັບພນລະບົດບາດຂອງສູນບໍລິການເຕັກນິກ ..... 4

**3**. ການລົງຢ້ຽມຢາມພາກສະໜາມ ..... 4

**4.** ການວາງແຜນດຳເນີນງານຂອງ 8 ເມືອງ ..... 5

**5.** ການເອື້ອອຳນວຍຈັດສະຖານທີ່ຄົ້ນຄ້ວາບັນຫາຕ່າງໆ ..... 5

**6**. ການປະເມີນຜົນຂອງກອງປະຊຸມ ..... 5

**7.** ສະຫຼູບ ແລະ ແຜນໃນຕໍ່ໜ້າ ..... 5

**8.** ເອກະສານແບບທ້າຍ ..... 7

ເອກະສານແບບທ້າຍ1. ລາຍຊື່ນັກສຳມະນຳກອນຜູ້ເຂົ້າຮ່ວມ ແລະ ວາລະກອງປະຊຸມ ..... 7

ເອກະສານແບບທ້າຍ2. ຜົນໄດ້ຮັບຈາກການລົງພາກສະໜາມຂອງກຸ່ມບ້ານນໍ້າບໍ່ ແລະ ກຸ່ມໂພນທອງ ..... 11

ເອກະສານແບບທ້າຍ 3 ແຜນດຳເນີນງານຂອງສູນບໍລິການເຕັກນິກ ໃນ 8 ເມືອງ ຂອງໂຄງການ URDP ..... 15

ເອກະສານແບບທ້າຍ 4 ການຈັດສະຖານທີ່ ກ່ຽວກັບການສ້າງເອກະສານ, ການຕິດຕາມກວດກາ ແລະ ການລາຍງານ ໂດຍ ແບ່ງອອກເປັນ 4 ກຸ່ມ ..... 26

ເອກະສານແບບທ້າຍ 5 ສິ່ງທີ່ທ່ານສົນໃຈຈະນຳເອົາໄປທົດສອບ ແລະ ການປະເມີນຜົນຂອງກອງປະຊຸມ ..... 28

# 1. ພາກສະເໜີ

## *1.1 ສະພາບລວມ*

ເພື່ອໃຫ້ 4 ເປົ້າໝາຍ 13 ມາດຕະການ ຂອງກະຊວງກະສິກຳ ແລະ ປ່າໄມ້ໄດ້ວາງອອກຖືກຈັດຕັ້ງປະຕິບັດ, ໂດຍສະເພາະມາດຕະການໃນການສົ່ງເສີມ ແລະ ບໍລິການເຕັກນິກ, ພາລະກິດທີ່ສຳຄັນຂອງຂະແໜງກະສິກຳ ແລະ ປ່າໄມ້ ແມ່ນການພະນັກງານລົງສູ່ກຸ່ມບ້ານ ຫຼື ຮາກຖານການຜະລິດ ສົມຄູ່ກັບການສ້າງສູນບໍລິການເຕັກນິກກະສິກຳ ແລະ ປ່າໄມ້ ເຮັດໜ້າທີ່ເຄື່ອນໄຫວຊຸກຍູ້ສົ່ງເສີມ-ເປັນຜູ້ບໍລິການດ້ານວິຊາການໃຫ້ແກ່ປະຊາຊົນຢູ່ແຕ່ລະທ້ອງຖິ່ນ.

ດັ່ງນັ້ນໂຄງການຄົ້ນຄ້ວາເຂດພູດອຍ ແລະ ພັດທະນາຄວາມອາດສາມາດ (URDP) ແມ່ນກຳລັງເຮັດວຽກຢູ່ໃນ 8 ເມືອງຂອງ 4 ແຂວງພາກເໜືອ. ຢູ່ໃນແຕ່ລະເມືອງແມ່ນໄດ້ຄັດເລືອກເອົາ ພະນັກງານ ຈຳນວນ 2 ທ່ານ ເພື່ອມາຮ່ວມເຮັດວຽກຄົ້ນຄ້ວາ, ສົນທະນາ ແລະ ຄວາມເປັນເອກະພາບກ່ຽວກັບ ຮ່າງພາລະບົດບາດ ສຳລັບສູນບໍລິການເຕັກນິກໂຄງການ URDP.

## *1.2 ຈຸດປະສົງ*

- ສະເໜີ ແລະ ຕົກລົງກ່ຽວກັບຮ່າງພາລະບົດບາດ ແລະ ຄວາມຮັບຜິດຊອບ ຂອງສູນບໍລິການເຕັກນິກ
- ປັບປຸງ ແລະ ຕົກລົງເຫັນດີ ກ່ຽວກັບແຜນກິດຈະກຳ ສຳລັບສູນບໍລິການເຕັກນິກ ຂອງກຸ່ມບ້ານ ແລະ ເມືອງ ແລະ ຄວາມຕ້ອງການສຳລັບຝຶກອົບຮົມ
- ຮຽນຮູ້ກ່ຽວກັບ ບົດຮຽນ ແລະ ປະສົບການດ້ານສູນບໍລິການເຕັກນິກ ກຸ່ມບ້ານ ຈາກເມືອງໂພນໄຊ

## *1.3 ຂັ້ນຕອນ ແລະ ຜູ້ເຂົ້າຮ່ວມ*

ຂັ້ນຕອນໃນການຈັດຕັ້ງປະຕິບັດແມ່ນນຳໃຊ້ການຮຽນຮູ້ແບບຜູ້ໃຫ່ຍ, ນັ້ນໝາຍວ່າ ໄດ້ເປີດໂອກາດໃຫ້ຜູ້ເຂົ້າຮ່ວມໄດ້ຮຽນຮູ້ຈາກການເຮັດວຽກຮ່ວມກັນ ແລະ ສົນທະນາເປັນກຸ່ມ ກ່ຽວກັບ ຮ່າງພາລະບົດບາດຂອງສູນບໍລິການເຕັກນິກຂອງໂຄງການ URDP, ຫົວຂໍ້ຕ່າງໆທີ່ໄດ້ຄົ້ນຄ້ວາແລ້ວ ດ້ວຍການສົນທະນາຢູ່ໃນຫ້ອງປະຊຸມ ແລະ ໃນພາກສະໜາມ.

ຜູ້ເຂົ້າຮ່ວມແມ່ນປະກອບດ້ວຍພະນັກງານຂອງ NAFRI 4 ທ່ານ, NAFReC 6 ທ່ານ, ເມືອງໂພນໄຊ 6 ທ່ານ, ນາໝໍ້ 3 ທ່ານ ແລະ ບັນດາ 6 ເມືອງໃໝ່ ເມືອງລະ 2 ທ່ານ ລວມ ທັງໝົດ 31 ທ່ານ (ລາຍຊື່ເບິ່ງເອກະສານຊ້ອນທ້າຍ 1)

## 2. ການສະເໜີກ່ຽວກັບພາລະບົດບາດຂອງສູນບໍລິການເຕັກນິກ

- ມື້ ວັນທີ່ 23/02/09 ເວລາ 8: 45 ນາທີ ທ່ານ ໄຊຊະນະ ອິນທະວົງ ຮອງຫົວໜ້າສູນຄົ້ນຄ້ວາ ກະສິກຳ ແລະ ປ່າໄມ້ ພາກເໜືອ ໄດ້ກ່າວເປີດກອງປະຊຸມແລະ ນັກສຳມະນາກອນຂຶ້ນແນະນຳຕົນເອງ ຕໍ່ມາ ທ່ານ ຄຳພູ ພຸດທະວົງ ສະເໜີ ຄວບຄືບໜ້າການຈັດຕັ້ງປະຕິບັດການຄົ້ນຄວ້າ ຂອງໂຄງການ URDP ໃນປີຜ່ານມາ, ຫຼັງຈາກນັ້ນ ທ່ານ ບັນດິດ ຮາມມະກຸນ ຂຶ້ນສະເໜີຮ່າງພາລະບົດບາດ, ຄວາມຮັບ ຜິດຊອບຂອງສູນບໍລິການເຕັກນິກ ທັດມາ ແມ່ນ ທ່ານ ທົງສະຫວັນແກ້ວນະຄອນສະເໜີການພົວພັນຂອງ ພາກສ່ວນຕ່າງໆທີ່ກ່ຽວຂ້ອງຢູ່ໃນລະດັບຕ່າງໆຈາກນັ້ນກໍ່ແບ່ງກຸ່ມສົນທະນາກ່ຽວກັບຮ່າງພາລະບົດບາດຂອງ ສູນບໍລິການເຕັກນິກ ຈາກການສົນທະນາເຫັນວ່າແຕ່ລະກຸ່ມແມ່ນເຫັນດີເປັນເອກະພາບ ແລະ ປັບປຸງບາງ ອັນລາຍລະອຽດ (ເບິ່ງເອກະສານແນບທ້າຍ1)

## 3. ການລົງຢ້ຽມຢາມພາກສະໜາມ

- ມື້ວັນທີ່ 24-25/02/09 ແມ່ນໄດ້ລົງຢ້ຽມຢາມພາກສະໜາມ ໂດຍແບ່ງອອກເປັນ 2 ກຸ່ມ ຄື: ກຸ່ມ ນ້ຳບໍ່ ແລະ ກຸ່ມໂພນທອງ ເຊິ່ງແຕ່ລະກຸ່ມແມ່ນໄດ້ ເຈາະຈີມ ແລະ ຖາມບັນດາພາກສ່ວນຕ່າງໆຄື:ກຸ່ມຜະ ລິດ, ກຸ່ມພໍ່ຄ້າ ຫຼື ເອກະຊົນ, ຫົວນ້າກຸ່ມບ້ານ ແລະ ພະນັກງານຂອງສູນບໍລິການເຕັກນິກ ເຊິ່ງຄຳຖາມ ຂອງຜູ້ເຂົ້າຮ່ວມມີຄື:

1. ປະເດັນທີ່ສຳຄັນຢູ່ໃນລະດັບກຸ່ມບ້ານມີຫຍັງແດ່? ແລະ ກິດຈະກຳຕ່າງໆຂອງສູນບໍລິການເຕັກນິກ ໃນປະຈຸບັນ ໄດ້ຊ່ວຍເຫຼືອ ຫຼື ບໍ່ໄດ້ຊ່ວຍເຫຼືອ ກຸ່ມບ້ານຄືແນວໃດ.
2. ແຜນການດຳເນີນຂອງສູນບໍລິການເຕັກນິກມີຄືແນວໃດ ແລະ ຖືກຈັດຕັ້ງປະຕິບັດແນວໃດ? ມີຈຸດ ດີ ແລະ ຈຸດອ່ອນອັນໃດແດ່?
3. ສູນບໍລິການເຕັກນິກ ມີສ່ວນພົວພັນ ແລະ ເຮັດວຽກກັບພາກສ່ວນອື່ນໆຄືແນວໃດ ແລະ ໄດ້ມີການ ຊ່ວຍເຫຼືອຫຍັງແດ່ ຫຼື ບໍ່ໄດ້ຮັບການຊ່ວຍເຫຼືອຫຍັງແດ່?
4. ສູນບໍລິການເຕັກນິກເກັບຂໍ້ມູນຂ່າວສານ ແລະ ເອື້ອອຳນວຍໃຫ້ແກ່ການສື່ສານ ລະຫວ່າງ ຊາວ ກະສິກອນ ແລະ ຊາວກະສິກອນ ຄືແນວໃດ? ມີຈຸດດີ ແລະ ຈຸດອ່ອນຫຍັງແດ່?
5. ໂດຍອີງໃສ່ຂໍ້ມູນຈາກການປຶກສາຫາລື ແລະ ຈາກການຢ້ຽມຢາມພາກສະໜາມ ທ່ານຄິດວ່າ ຮ່າງ ພາລະບົດບາດ ທີ່ໄດ້ສະເໜີໄປນັ້ນ ວ່າມີອັນໃດຄວນຈະປ່ຽນແປງ, ເພີ່ມເຂົ້າ ຫຼື ຕັດອອກ ແລະ ຄວນເຮັດໃຫ້ແຈ້ງອອກຕື່ມອີກ?

ຈາກລົງພາກສະໜາມຂອງ ສອງກຸ່ມ ເຫັນວ່າ ມີຫຼາຍປະເດັນທີ່ໜ້າສົນໃຈ ເປັນຕົ້ນແມ່ນກິດຈະ ກຳກຸ່ມປູກພືດຜັກ ບ້ານນ້ຳບໍ່ ແລະ ກຸ່ມລ້ຽງງົວບ້ານໂພນທອງ ແລະ ກິດຈະກຳອື່ນໆ ທີ່ໄດ້ຮັບໝາກຜົນ ແລະ ມີບາງອັນຕ້ອງໄດ້ປັບປຸງ (ເບິ່ງເອກະສານຊ້ອນທ້າຍ 2)

## 4. ການວາງແຜນດຳເນີນງານຂອງ 8 ເມືອງ

- ມື້ວັນທີ່ 27/02/09 ແຕ່ລະເມືອງແມ່ນຂື້ນສະເໜີແຜນຂອງຕົນເອງ ແລະ ສົນທະນາກັບບັນດາເມືອງຕ່າງໆເພື່ອປະກອບຄຳຄິດເຫັນເຂົ້າໃນແຜນປີ 2009 (ເບິ່ງເອກະສານຊ້ອນທ້າຍ 3)

## 5. ການເອື້ອອຳນວຍຈັດສະຖານທີ່ຄົ້ນຄ້ວາບັນຫາຕ່າງໆ

ຈາກນັ້ນໃນຕອນສວຍ ມື້ວັນທີ່ 27/02/09 ແມ່ນແບ່ງເປັນກຸ່ມສົນທະນາ ໃນການສ້າງໂອກາດໃຫ້ນັກສຳມະນາກອນໄດ້ເຂົ້າໃຈ ແລະ ປຶກສາຫາລື ກ່ຽວກັບການລາຍງານ, ການຕິດຕາມກວດກາ ປະເມີນການຄົ້ນຄ້ວາ, ການສ້າງກິດຈະກຳການສື່ສານ ແລະ ຂໍ້ມູນຂ່າວສານ, ການສ້າງເອກະສານບົດຮຽນດີເດັ່ນ ແລະ ຊາວກະສິກອນທີ່ດີເດັ່ນ(ລາຍລະອຽດເບິ່ງເອກະສານຊ້ອນທ້າຍ 4)

## 6. ການປະເມີນຜົນຂອງກອງປະຊຸມ

ຫຼັງຈາກນັ້ນທາງຈັດຕັ້ງກອງປະຊຸມກໍ່ໃຫ້ນັກສຳມະນາກອນຜູ້ເຂົ້າຮ່ວມຂຽນໃສ່ແບບຟອມການປະເມີນວ່າໃນໄລຍະເວລາ 5 ວັນທີ່ເຂົ້າຮ່ວມກອງປະຊຸມເປັນແນວໃດ? ມີຈຸດດີ? ແລະ ປັບປຸງຫຍັງແດ່? (ລາຍລະອຽດເບິ່ງເອກະສານຊ້ອນທ້າຍ 5)

ຕໍ່ມາ ທ່ານ ບັນດິດ ธามມະກຸນ ກໍ່ສະຫຼຸບ ແລະ ປິດວະລະກອງປະຊຸມເຊີງປະຕິບັດການກ່ຽວກັບຮ່າງການວາງແຜນ ແລະ ກຳນົດພາລະບົດບາດ ຂອງສູນບໍລິການເຕັກນິກ.

## 7. ສະຫຼູບ ແລະ ແຜນໃນຕໍ່ໜ້າ

- ໄດ້ຮຽນຮູ້ກ່ຽວກັບກິດຈະກຳ ແລະ ບົດຮຽນຕ່າງໆຈາກສູນບໍລິການເຕັກນິກ ຢູ່ເມືອງໂພນໄຊ
- ຕົກລົງເອກະພາບກັນຕໍ່ຮ່າງພາລະບົດບາດ, ໜ້າທີ່, ຄວາມຮັບຜິດຊອບ ຂອງສູນບໍລິການເຕັກນິກ
- ສຳເລັດໃນການສ້າງຮ່າງແຜນການດຳເນີນງານຂອງສູນບໍລິການເຕັກນິກໃນແຕ່ລະເມືອງ
- ຮຽນຮູ້ກ່ຽວກັບ: ການສ້າງກະດານຂ່າວ, ການສ້າງເອກະສານບົດລາຍງານ, ການສ້າງເອກະສານສັງລວມບົດຮຽນແລະປະສົບການຂອງຊາວກະສິກອນທີ່ດີເດັ່ນ ແລະ ການເອື້ອອຳນວຍກຸ່ມຊາວກະສິກອນ.
- ຕົກລົງ ແລະ ເປັນເອກະພາບກັນກ່ຽວກັບແຜນທີ່ຈະສືບຕໍ່ພັດທະນາພາລະບົດບາດຂອງສູນ

| ກິດຈະກຳ | ກຳນົດເວລາ | ຜູ້ຮັບຜິດຊອບ |
|---|---|---|
| ການລະດົມແນວຄວາມຄິດ ແລະ ຕົກລົງກ່ຽວກັບການຄົ້ນຄວ້າສຳລັບປີນີ້:<br>• ການສື່ສານ/ຂໍ້ມູນຂ່າວສານ<br>• ການຕະຫຼາດ<br>• ກຸ່ມຊາວກະສິກອນ/ການຈັດຕັ້ງທ້ອງຖິ່ນ<br>• ສ້າງຄວາມເຂົ້າໃຈກ່ຽວກັບກົນໄກໃນການຂະຫຍາຍກິດຈະກຳ<br>• ລະບົບຂໍ້ມູນຂ່າວສານແລະອົງຄວາມຮູ້ ຕ່າງໆ | ວັນສຸກ, 5 ມີນາ | CAFRI, NAFReC, AFPRC |
| ພັດທະນາຮ່າງກອບແນວຄວາມຄິດ ແລະ ສະເໜີຕໍ່ຫ້ອງການສະພາວິທະຍາສາດ | ອາທິດສຸດທ້າຍຂອງເດືອນມີນາ | ບັນດິດ |
| ພັດທະນາບົດສະເໜີການຄົ້ນຄວ້າ | ມີນາ/ເມສາ | CAFRI, NAFReC, AFPRC |
| ດຳເນີນກິດຈະກຳການຄົ້ນຄວ້າ | ພຶດສະພາ-ກັນຍາ | CAFRI, NAFReC, AFPRC |
| ພັດທະນາຖົງເຄື່ອງມື/ປຶ້ມສັງລວມຂໍ້ມູນສຳລັບສູນບໍລິການເຕັກນິກ/ກຸ່ມບ້ານ | ກັນຍາ | NAFRI-NAFES |
| ສະເໜີ ແລະ ທົບທວນເບິ່ງຜົນຂອງການຄົ້ນຄວ້າຄືນດ້ວຍການຈັດກອງປະຊຸມຮ່ວມກັບສູນບໍລິການເຕັກນິກ | ກັນຍາ | |

## 8. ເອກະສານແນບທ້າຍ

*ເອກະສານແນບທ້າຍ1. ລາຍຊື່ນັກສຳມະນາກອນຜູ້ເຂົ້າຮ່ວມ ແລະ ວາລະກອງປະຊຸມ*

| ລ/ດ | ຊື່ ແລະ ນາມສະກຸນ | ພາກສ່ວນ | ນຳເບີໂທລະສັບ |
|---|---|---|---|
| 1 | ນາງ ໜຶ່ງຮັກ ແກ້ວປະເສີດ | ກ/ກ ເມືອງນາແລ | 5729057 |
| 2 | ນາງ ຄູງຝັນ ກະເສີມສຸກ | ກ/ກ ເມືອງວຽງຄຳ | 5219576 |
| 3 | ນາງ ຈິດຕາວັນ ແກ້ວລາສີ | ປະສານງານເມືອງໂພນໄຊ | 5711638 |
| 4 | ນາງ ພອນສະຫວັນ ວິໄລວັນ | ສູນພາກເໜືອ | 6782948, 2131724 |
| 5 | ທ່ານ ສົມພອນ ແກ້ວປະເສີດ | ປະສານງານເມືອງໂພນໄຊ | 5112355 |
| 6 | ທ່ານ ຄຳສົມແພງ ອິນທະວົງ | ຫົວໜ້າປະສານງານເມືອງໂພນໄຊ | 5377077, 2993377 |
| 7 | ທ່ານ ບັນທະສັກ ວົງພູທອນ | ສູນພາກເໜືອ | 5295897 |
| 8 | ທ່ານ ເຄືອບ ພົມມະລີສັກ | ກ/ກ ເມືອງນາແລ | 6066022 |
| 9 | ທ່ານ ຄຳສົນ ຄຸນມະນີ | ກ/ກ ເມືອງວຽງພູຄາ | 6644722 |
| 10 | ທ່ານ ສຸກີ ສີດາພອນ | ສູນບໍລິການເຕັກນິກ ເມືອງວຽງຄຳ | 6576006 |
| 11 | ທ່ານ ຄຳພູວັນ ພິນິດ | ສູນບໍລິການເຕັກນິກ ເມືອງເມິງ | 5184027 |
| 12 | ທ່ານ ລີໄທ ລ້ານຄຳແດງ | ຂໍ້ມູນຂ່າວສານ ເມືອງເມິງ | 6247023 |
| 13 | ນາງ ນິດຄຳ ຈັນທະວົງ | ສູນພາກເໜືອ | 5770660 |
| 14 | ທ່ານ ໄຊວັນຊາ ສຸກຂີ | ກ/ກ ເມືອງໂພນໄຊ | 6429707 |
| 15 | ທ່ານ ໄພ ລໍອິນສອນ | ກ/ກ ເມືອງຮຸນ | 6070310 |
| 16 | ທ່ານ ຈັນທະຈອນ | ກ/ກ ເມືອງຜາອຸດົມ | 2443001 |
| 17 | ທ່ານ ໄພສອນ ອາລຸນສະຫວັດ | ກ/ກ ເມືອງຜາອຸດົມ | 6454343 |
| 18 | ທ່ານ ມິດ ວົງສາແກ້ວມະນີ | ຫ້ອງການປະສານງານເມືອງໂພນໄຊ | 6429794 |
| 19 | ທ່ານ ສຸລິວັນ ວັນນະສຸກ | ຫ້ອງການປະສານງານເມືອງນາໝໍ້ | 5656446 |
| 20 | ທ່ານ ສີທົນ ຍຶດໝັ້ນ | ຫ້ອງການປະສານງານ ເມືອອງຮຸນ | 5649300 |
| 21 | ທ່ານ ພູມອນ ຄຸນສີລິເຮືອງ | ຫ້ອງການກະສິກຳ ເມືອງວຽງພູຄາ | 5196223 |
| 22 | ນາງ ສົມເພັດ ສຸກພັນໄຊ | ປະສານງານ ເມືອງໂພນໄຊ | |
| 23 | ທ່ານ ຄຳພູ ພຸດທະວົງ | ໂຄງການຄຸ້ມຄອງການຄົ້ນຄວ້າ | 2207251 |
| 24 | ທ່ານ ຄຳຜູ ວໍລະວົງ | ປະສານງານເມືອງນາໝໍ້ | 4007704, 2376526 |
| 25 | ທ່ານ ບັນດິດ ຣາມາງກູຣ | ສູນຂໍ້ມູນຂ່າວສານ | 2211317 |
| 26 | ທ່ານ ທົງສະຫວັນ ແກ້ວນະຄອນ | ສູນພາກເໜືອ | 5771169 |
| 27 | ທ່ານ ໄຊຊະນະ ອິນທະວົງ | ສູນພາກເໜືອ | 5409043 |
| 26 | ທ່ານ ຄຳພຸດ ແກ້ວບຸນນຳ | ກະສິກຳ ເມືອງໂພນໄຊ | 6839382 |

| | | | |
|---|---|---|---|
| 29 | ນາງ ນາລີ ອິນທະພູສຸກ | ເມືອງນາໝໍ້ | 2553822 |
| 30 | ທ່ານ ຂັນຄໍາ ອ້ວນອຸດົມ | ສູນຂໍ້ມູນຂ່າວສານ | 5426630 |
| 31 | ນາງ ພອນມະນີ ສີວິໄລ | ສູນພາກເໜືອ | 2366190 |

| | | |
|---|---|---|
| ມື້ທີ 1<br>(21 ກຸມພາ) | ເດີນທາງ ຈາກວຽງຈັນ - ຫຼວງພະບາງ | ສະຖານທີ |
| ມື້ທີ 2<br>(22 ກຸມພາ) | ເດີນທາງຈາກຫຼວງພະບາງ - ເມືອງໂພນໄຊ<br>ກະກຽມການຝຶກອົບຮົມ<br>ເມືອງຕ່າງໆເດີນມາຮອດເມືອງໂພນໄຊ | |
| ມື້ທີ 3<br>(23 ກຸມພາ) | ການສະເໜີກ່ຽວກັບພາລະບົດບາດຂອງສູນບໍລິການເຕັກນິກ:<br>• ການສະເໜີ ແລະ ຄວາມຄາດຫວັງ<br>• ແຈ້ງກ່ຽວກັບຫົວຂໍ້ຂົງເຂດການຄົ້ນຄວ້າ<br>• ສະເໜີກ່ຽວກັບພາລະບົດບາດຂອງສູນບໍລິການເຕັກນິກ<br>• ຄົ້ນຄວ້າເປັນກຸ່ມ ເລື້ອງພາບະລະບົດບາດຂອງສູນບໍລິການເຕັກນິກ<br>• ການສະເໜີ ແລະ ປຶກສາຫາລື ກ່ຽວກັບການເຊື່ອມໂຍງ ຂອງສູນບໍລິການເຕັກນິກ ເຂົ້າຫາພາກສ່ວນຕ່າງໆທີ່ກ່ຽວຂ້ອງ<br>• ກະກຽມການຢ້ຽມຢາມພາກສະໜາມ (ນໍ້າບໍ່ ແລະ ໂພນທອງ) | ເມືອງໂພນໄຊ |
| ມື້ທີ 4 – 5<br>(24 – 25 ກຸມພາ) | ຢ້ຽມຢາມກຸ່ມບ້ານ: (ເກັບກໍາຂໍ້ມູນ)<br>• ເນັ້ນໃນການຄົ້ນຫາ ຫຼື ສໍາຫຼວດ ປະເດັນຕ່າງໆ ຢູ່ໃນກຸ່ມບ້ານ ປະຈຸບັນ ແລະ ພວກເຂົາແກ້ໄຂປະເດັນຕ່າງໆເຫຼົ່ານັ້ນ ຄືແນວໃດ | ສູນບໍລິການເຕັກນິກ |
| ມື້ທີ 6<br>(26 ກຸມພາ) | ສະເໜີຜົນ ແລະ ວາງແຜນການ<br>• ກະກຽມບົດລາຍງານ ແລະ ບົດສະເໜີ ກ່ຽວກັບສິ່ງທີ່ໄດ້ເກັບກໍາມາ<br>• ສ້າງແຜນການດໍາເນີນງານ ແລະ ແຜນຄວາມຕ້ອງການໃນການຝຶກອົບຮົມ ສໍາລັບສູນບໍລິການເຕັກນິກຂອງຕົນເອງ | ເມືອງໂພນໄຊ |
| ມື້ທີ 7<br>(27 ກຸມພາ) | ສະຫຼຸບ:<br>• ສະເໜີແຜນການດໍາເນີນຂອງສູນບໍລິການເຕັກນິກ<br>• ຈັດກຸ່ມລະດົມແນວຄວາມຄິດກ່ຽວກັບການສ້າງເອກະສານ ແລະ ການເຜີຍແຜ່<br>• ກໍານົດຫົວຂໍ້ຄົ້ນຄວ້າ ແລະ ຈັດພະນັກງານຮັບຜິດຊອບ<br>• ສະຫຼຸບສັງລວມ ແລະ ສະເໜີຂັ້ນຕອນທີ່ຈະເຮັດຕໍ່ໄປ<br>ເດີນທາງກັບຫຼວງພະບາງ | ເມືອງໂພນໄຊ |
| ມື້ທີ 8<br>(28 ກຸມພາ) | ເດີນທາງກັບວຽງຈັນ | |

ສັງລວມການຄົ້ນຄ້ວາເປັນກຸ່ມກ່ຽວກັບພາລະບົດບາດ

| | ມີອັນໃດແດ່ດີ | ມີອັນໃດຍັງບໍ່ທັນຈະແຈ້ງ | ມີອັນໃດຍັງຂາດ |
|---|---|---|---|
| ກຸ່ມທີ່ 1 : | | | |
| ຫຼັກການຂອງພາລະບົດບາດ | • ເຫັນດີ | | |
| ເປົ້າໝາຍ | | • ສິນເຊື່ອ(4)ໃຫ້ອະທິບາຍຄືນ | |
| ບົດບາດ ແລະ ຄວາມຮັບຜິດຊອບ | | • ວິເຄາະກິດຈະກຳຕ່າງໆທີ່ກຳລັງປະຕິບັດຢູ່ໃນກຸ່ມບ້ານ ແລະ ເຮັດການປັບປຸງນໂດຍອີງໃສ່ບົດຮຽນທີ່ຖອດຖອນໄດ້(ອະທິບາຍຄືນ)<br>• ສ້າງຄວາມເຂັ້ມແຂງທາງດ້ານຄວາມຮູ້ຄວາມສາມາດໃຫ້ກັບຊາວນາເພື່ອໃຊ້ໃນການຕັດສິນໃຈອີງໃສ່ຂໍ້ມູນຂ່າວສານ ແລະ ເພີ້ມສິດ(ອະທິບາຍຄືນ) | • ຈັດໃຫ້ຊາວກະສິກອນມີການແລກປ່ຽນບົດຮຽນນຳກັນ |
| ການຈັດຕັ້ງ ແລະ ການຄຸ້ມຄອງ | | | • ປະເພນີ... |
| ພາລະບົດບາດຂອງພະນັກງານ | | | |
| ກຸ່ມທີ່ 2 : | | | |
| ຫຼັກການຂອງພາລະບົດບາດ | | | |
| ເປົ້າໝາຍ | • ຂໍ້ທີ່ 4:ວິຊາການສາມາດຊ່ວຍຊາວກະສິກອນໄດ້ເຊັ່ນ:ດ້ານແນວພັນ,ດ້ານເຕັກນິກ ແລະ ດ້ານການຕະຫຼາດ | • ຂໍ້ທີ່ 1: ຊາວນາບໍ່ສາມາດກຳນົດຮູບແບບດ້ວຍຕົນເອງ | • ໃຫ້ຊາວກະສິກອນຮູ້ຈັກຮູບແບບການນຳໃຊ້ເຕັກນິກໃຫ້ຖືກຕ້ອງກັບທ້ອງຖິ່ນ |

| | | | |
|---|---|---|---|
| ບົດບາດ ແລະ ຄວາມ ຮັບຜິດຊອບ | | • ຂໍ້ທີ່ 6: ການເຂົ້າເຖິງສິ່ງນຳໃຊ້ເຂົ້າໃນການຜະລິດ<br>• ຂໍ້ທີ່ 7.4:ວິເຄາະກິດຈະກຳຕ່າງໆທີ່ກຳລັງປະຕິບັດຢູ່ໃນກຸ່ມບ້ານ (ຕັດອອກ) | • ອຸປະກອນການຜະລິດກະສິກຳ<br>• ຢາຂ້າແມງໄມ້<br>• ຝຸ່ນ |
| ການຈັດຕັ້ງ ແລະ ການຄຸ້ມຄອງ | • ມີການສ້າງແຜນປະຈຳເດືອນ,ງວດ,ປີ ແລະ ການສະຫຼຸບລາຍງານ | | • ຂາພະນັກງານວິຊາການດ້ານຊົນລະປະທານ<br>• ຢາກໃຫ້ພະນັກງານພາຍໃນສູນມີສິດລາຍງານໃຫ້ທາງຂັ້ນເທິງໂດຍກົງ |
| ພາລະບົດບາດຂອງ ພະນັກງານ | | | |
| ກຸ່ມທີ່ 3 : | | | |
| ຫຼັກການຂອງພາລະບົດບາດ | | • ຄຳສັບຈາກຊາວນາມາເປັນຊາວກະສິກອນ? | |
| ເປົ້າໝາຍ | | | |
| ບົດບາດ ແລະ ຄວາມ ຮັບຜິດຊອບ | | | |
| ການຈັດຕັ້ງ ແລະ ການຄຸ້ມຄອງ | | • ສ້າງແຕ່ເອກະສານແນວພັນພືດ, ບໍ່ມີເອກະສານແນວພັນສັດ | • ຂໍ້ 2ພາລະບົດບາດ 6 ຕື່ມແນວພັນສັດ |
| ພາລະບົດບາດຂອງ ພະນັກງານ | | • ຈຳນວນພະນັກງານຮັບຜິດຊອບ | • ຮອງຫົວໜ້າສູນບໍລິການ 1 ຄົນ<br>• ວິຊາການດ້ານຂໍ້ມູນຂ່າວສານ 2 ຄົນ |

| ກຸ່ມທີ່ 4 : | | | |
|---|---|---|---|
| ຫຼັກການຂອງພາລະບົດບາດ | • ເຫັນດີ | | |
| ເປົ້າໝາຍ | | | |
| ບົດບາດ ແລະ ຄວາມ ຮັບຜິດຊອບ | | • ສະໜອງນະໂຍບາຍຫຼັກ<br>• ການຊອກຫາວິທີການ<br>• ການແກ້ໄຂບັນຫາ | • ການຍ້ອງຍໍຊົມເຊີຍ ຄອບຄົວຊາວກະສິກອນທີ່ ເຮັດໄດ້ດີ(ຄອບຄົວຕົວ ແບບ) |
| ການຈັດຕັ້ງ ແລະ ການຄຸ້ມ ຄອງ | | | |
| ພາລະບົດບາດຂອງ ພະນັກງານ | | | • ກຳນົດບຸລິມະສິດຜະລິດ ຕະພັນຂອງກຸ່ມບ້ານ |

*ເອກະສານແນບທ້າຍ2. ຜົນໄດ້ຮັບຈາກການລົງພາກສະໜາມຂອງກຸ່ມບ້ານນ້ຳບໍ່ ແລະ ກຸ່ມໂພນທອງ*

| ພາລະບົດບາດ | ມີຫັຍງທີ່ທ່ານສົນໃຈແລະ ຕ້ອງການນຳໄປທົດສອບໃນເມືອງ ຂອງທ່ານ | ສິ່ງທີ່ຕ້ອງການປັບປຸງມີຫັຍງແດ່? | ສິ່ງອື່ນໆ, ຄຳຖາມ ແລະ ຂໍ້ຄິດເຫັນ |
|---|---|---|---|
| ການວາງແຜນແລະ ການປະສານງານ | - ສູນມີການລົງວາງແຜນກັບກຸ່ມ ບ້ານ | - ເຊື່ອມໂຍງແຜນກຸ່ມບ້ານເຂົ້າກັບແຜນ ສູນບໍລິການ | |
| ການສາທິດ ແລະ ການເຝິກອົບຮົມ | - ການສ້າງສວນສາທິດ ຢູ່ພາຍ ໃນສູນ ແລະ ພື້ນທີ່ຊາວ | - ມີວິຊາການຂັ້ນບ້ານ<br>- ປັບປຸງກິດຈະກຳພາຍໃນສູນໃຫ້ມັນດີ | |

| | | | |
|---|---|---|---|
| | ກະສິກອນ<br>- ການຝຶກອົບຮົມໃນພື້ນທີ່ຕົວຈິງ ຂອງຊາວກະສິກອນ | ຂື້ນ(ສວນກ້າບໍ່ມີເບ້ຍໄມ້, ການລ້ຽງໝູບໍ່ເປັນລະບົບ) | |
| ສະໜອງຂໍ້ມູນຂ່າວສານ | - ກະດານຂ່າວ<br>- ຂໍ້ແນະນຳຕ່າງໆ ເຊັ່ນ: ແຜ່ນພັບດ້ານເຕັກນິກວິທີການ ແລະ ຄອບຄົວຕົວແບບ<br>- ຮູບພາບຜົນສຳເລັດຕ່າງໆ | - ຈັດການຂາຍ, ແລກປ່ຽນແລະກະຈາຍຂໍ້ມູນໃນຕະຫຼາດນັດ (ລົງລາດ10ວັນ/ຄັ້ງ)<br>- ໃຫ້ຕິດຂໍ້ມູນສອງໜ້າກະດານຂ່າວທີ່ມີຜົນສຳເລັດຂອງຄອບຄົວຕົວແບບການປ່ຽນແມ່ນ 2 ອາທິດຕໍ່ເທື່ອ (ປະຈຸບັນຕິດໜ້າດຽວ)<br>- ລົງເລິກໃຫ້ແມ່ຍິງສົນໃຈອ່ານໃຫ້ຫຼາຍ<br>- ຕິດຕາມ ແລະ ປະເມີນຜົນແບບມີສວນຮ່ວມ (ກິດຈະກຳທີ່ໄປໄດ້ດີ) | |
| ສະໜັບສະໜູນກຸ່ມຊາວກະສິກອນ | -ບົດບັນທຶກສັນຍາ ສົ່ງແນວພັນຄືນ<br>-ສະໜອງເຕັກນິກ ແລະ ວິທີການໃໝ່<br>ໃຫ້ແກ່ຊາວກະສິກອນ | - ຕິດຕາມ ແລະ ເກັບກຳຊ່ວຍ ຊາວກະສິກອນທີ່ປະສົບຜົນສຳເລັດດ້ານກິດຈະກຳທີ່ເຂົ້າເຈົ້າເຮັດພາຍໃນບ້ານວ່າມີ ຊາວກະສິກອນ ພາຍໃນບ້ານ ແລະ ບ່ອນອື່ນເຂົ້າມາເບິ່ງ ແລະ ສົນໃຈ, ນຳໄປຈັດຕັ້ງປະຕິບັດ (ມີຈັກຄອບຄົວ,ຢູ່ໃສ່, ເປັນ ແນວໃດ?)<br>- ໃຫ້ການຕິດຕາມຊຸກຍູ້ລົງໄກ້ສິດເຂດທີ່ລົງໄປສາທິດ | |

| | | | |
|---|---|---|---|
| ການເຊື່ອມໂຍງຊາວກະສິກອນກັບພໍ່ຄ້າ | | - ຊາວກະສິກອນກັບພໍ່ຄ້າ(ບໍລິສັດ)ແມ່ນມີບັນຫາ<br>- ໃຫ້ສູນເປັນກົນໄກປະສານງານຊາວກະສິກອນກັບບໍລິສັດໃນດ້ານການຕະຫຼາດ | - ໃຫ້ພາກສ່ວນສູນ ຊ່ວຍພົວພັນນຳພາກສ່ວນທີ່ກ່ຽວຂອງ ໃຫ້ເອົາໃຈໃສ່ເປັນພິເສດ (ເລື່ອງຄັ່ງ) ຢາກຖອດຖອນບົດຮຽນນຳບ່ອນອື່ນ |
| ອຳນວຍຄວາມສະດວກໃນການເຂົ້າເຖິງສິ່ງນຳເຂົ້າໃນການຜະລິດ | | | |
| ສ້າງເອກກະສານ ກ່ຽວກັບຄອບຄົວຕົວແບບ | - ຜະລິດເອກະສານ ວິທີການແບບພື້ນເມືອງ<br>ເຂົ້າໃນການຜະລິດ(ປ້ອງແລະປິ່ນປົວສັດ, ປ້ອງກັນພືດ) | - ສ້າງເອກກະສານ ຄອບຄົວຕົວແບບ(ຕ້ອງມີຮູບຂອງຜູ້ປະຕິບັດຍິ່ງເປັນການດີ) | |

| **ພາລະບົດບາດ** | **ຂໍ້ສົນໃຈ** | **ສິ່ງຄວນປັບປຸງ** | **ຄຳຖາມ ແລະ ຂໍ້ຄິດເຫັນ** |
|---|---|---|---|
| 1. ການວາງແຜນ ແລະ ປະສານງານ | 1. ການຈັດຕັ້ງ ແລະ ຄຸ້ມຄອງກຸ່ມ ( ກຸ່ມລ້ຽງສັດ, ກຸ່ມປູກທັຍາ )<br>2.ການວາງແຜນຮ່ວມກັບຊາວກະສິກອນໃນແຕ່ລະເດືອນ<br>3. ການແບ່ງໜ້າທີ່ຄວາມຮັບຜິດຊອບຂອງພະນັກງານ | 1. ການກຳນົດຂອບເຂດດິນກະສິກຳ-ປ່າໄມ້.<br>2. ຂອບເຂດການປະສານງານ ລະຫວ່າງສູນ ກັບຊາວກະສິກອນ | 1. ການກຳນົດພາລະບົດບາດຂອງສູນ ແລະ ໂຄງຮ່າງການຈັດຕັ້ງຂອງສູນ |
| 2. ການສາທິດ ແລະ ຝຶກອົບຮົມ | 1. ນຳໃຊ້ລະບົບ Afram(ການປູກທັຍາ)<br>2. ການປູກມອນ-ລ້ຽງມ້ອນ<br>3. | 1. ປັບປຸງການສາທິດແລະການຝຶກອົບຮົມຂັ້ນກຸ່ມບ້ານ<br>2. ປັບປຸງກຸ່ມສ້ຽງສັດ | 1. ເປັນບ່ອນສາທິດເຕັກໂນໂລຍີ ( ພືດ,ສັດ,ປ່າໄມ້) |

| | | | |
|---|---|---|---|
| | ການຝຶກອົບຮົມການຮັກສາແລະປິ່ນປົວສຸຂະພາບສັດ<br>4. ການທອມສັດ | | |
| 3. ສະໜອງຂໍ້ມູນຂ່າວສານ | 1. ຖົງປັນຍາກະສິກຳ | 1. ຫ້ອງສະມຸດ<br>2. ກະດານຂ່າວ<br>3. ໂທລະໂຄ່ງບ້ານ | ສາຍຊີດີເຕັກນິກວິຊາການໃຫ້ຊາວກະ<br>ສິກອນໄດ້ເບິ່ງ |
| 4. ສະໜັບສະໜູນກຸ່ມຊາວກະສິກອນ | 1. ແນວພັນພືດ-ສັດ<br>2. ເຕັກນິກວິທີການການ(ປູກຫັຍາລ້ຽງສັດ)<br>3. ອຳນວຍ ແລະ ສະໜັບສະໜູນກຸ່ມຜະລິດ | 1. ການບໍລິການຢາ ແລະ ປິ່ນປົວສັດ | 1. ຂະຫຍາຍກິດຈະກຳຕ່າງໆໄປສູ່ບ້ານອື່ນ |
| 5. ການເຊື່ອມໂຍງຊາວກະສິກອນກັບພໍ່ຄ້າ | | | 1.ຄວນມີການສະໜອງທຶນ,ແນວພັນ<br>2. ລະດົມຊາວກະສິກອນຜະລິດໃຫ້ມີຄຸນນະພາບ<br>3. ການຕະຫຼາດ ( ລາຄາ, ສັນຍາ ) |
| 6. ອຳນວຍຄວາມສະດວກໃນການສ້າງເອກະສານປະສົບການ | | | 1. ສ້າງຄູ່ມືແລະແຜ່ນພັບເຕັກນິກວິຊາການ |

*ເອກະສານແບບທ້າຍ 3 ແຜນດຳເນີນງານຂອງສູນບໍລິການເຕັກນິກ ໃນ 8 ເມືອງ ຂອງໂຄງການ URDP*

1. ເມືອງໂພນໄຊ

| ກິດຈະກຳ | ຮັບຜິດ ຊອບ | ສະຖານທີ່ຈັດຕັ້ງ |
|---|---|---|
| **1. ການຝຶກອົບຮົມ, ການສາທິດ ແລະ ການສະໜອງແນວພັນ ແລະ ສິ່ງນຳເຂົ້າ** | | |
| 1.1 ການຜະລິດລູກໝູ | ນ ສົມເພັດ | ສູນບໍລິການ |
| 1.2 ສາທິດການລ້ຽງແບ້ | ທ ສາຍສະໜອນ | ສູນບໍລິການ |
| 1.3 ສ້າງກອງທຶນຢາວັກຊີນ | ທ ສົມພອນ | ສູນບໍລິການ |
| 1.4 ສາທິດການປູກຜັກນອກລະດູ | ທ ສົມລິດ | ສູນບໍລິການ |
| 1.5 ສະໜອງແນວພັນເຂົ້າບົກ | ນ ລັດດາ | ນ້ຳບໍ່,ຫ້ວຍໂນະ,ທ່າໂພ |
| 1.5 ລ້ຽງໝູຊຸມ ໃນພື້ນທີ່ຊາວກະສິກອນ | ນ ສົມເພັດ | ນ້ຳບໍ່,ຫ້ວຍໂນະ |
| 1.6 ຂະຫຍາຍ ການປູກ ໄມ້ໃຫ້ໝາກ | ທ ສົມລິດ | ນ້ຳບໍ່, ທ່າໂພ,ຫວ້ຍມັນ,ຫ້ວຍໂນະ |
| 1.7 ສຶກສາການຂະຫຍາຍລະບົບເພື່ອການປູກກະລ່ຳປີ | ທ ສົມພອນ | ນ້ຳບໍ່ |
| 1.8 ຂະຫຍາຍເນື້ອທີ່ການປູກຫຍ້າພູສູງ-ພູຈະນອມ | ນ ສົມເພັດ | ປຸ່ງເປົ້າ |
| 1.9 ປະເມີນຄືນການປູກຫຍ້າຫອມງົວ ບ້ານປຸ່ງເປົ້າ,ຫ້ວຍມະຫາ | ນ ສົມເພັດ | ເຂດພູສູງ, ພູຈະນອມ |
| **2. ກິດຈະກຳດ້ານສື່ສານ ແລະ ຂໍ້ມູນຂ່າວສານ** | | |
| 2.1 ປະເມີນກະດານຂ່າວບ້ານ ໃນໄລ່ຍະ 1 ປີຜ່ານມາ | ນ ຈິດຕະວັນ | ນ້ຳບໍ່, ປຸ່ງເປົ້າ |
| 2.2 ຈັດງານວ່າງສະແດງຂໍ້ມູນຂ່າວສານ ຕະຫຼາດນັດ ເດືອນລະຄັ້ງ | ນ ຈິດຕະວັນ | ນ້ຳບໍ່ |
| 2.2 ສືບຕໍ່ກິດຈະກຳກະດານຂ່າວ | ນ ຈິດຕະວັນ | ນ້ຳບໍ່, ປຸ່ງເປົ້າ |

| | | |
|---|---|---|
| 2.3 ກະຈາຍຂ່າວສານລົງສູ່ ໂຮງຮຽນປະຖົມ ສະໜອງແນວພັນພືດ(ຈຳນວນໜຶ່ງ) ແລະເຕັກນິກ | ນ ຈິດຕະວັນ ນ ລັດດາ | ຫວ້ຍມັນ |
| 2.3 ນຳພາຊາວກະສິກອນແລກປ່ຽນບົດຮຽນລະຫວ່າງ ຊາວກະສິກອນດ້ວຍກັນ | ທ ສົມພອນ | ຫວ້ຍມັນ,ນ້ຳບໍ່, ທ່າໂພ, ຫ້ວຍມະຫາ |
| **3. ການຕະຫຼາດ ແລະ ຊ່ວຍເຫຼືອກຸ່ມຊາວກະສິກອນ** | | |
| 3.1 ຊ່ວຍຊາວກະສິກອນໃນການເຮັດສັນຍາ,ເປັນ ເວທີ ເຈລະຈາຕໍ່ລອງລາຄາສິນຄ້າລະຫວ່າງຊາວກະສິກອນກັບ ຜູ້ເກັບຊື້ | ທ ສົມພອນ | ກຸ່ມບ້ານນ້ຳບໍ່ |

| ກິດຈະກຳ | ແມ່ນໃຜຮັບຜິດຊອບ | ສະຖານທີ່ |
|---|---|---|
| **1.ການເຝິກອົບຮົມ,ການສາທິດ,ການສະໜອງແນວພັນ ແລະ ສິ່ງນຳເຂົ້າ** | | |
| 1.1 ການເຝິກອົບຮົມການສາວໄໝ | ຈວນ,ບຸນມາ | ໂພນທອງ |
| 1.2 ການຜະລິດລູກໝູພາຍໃນສູນ | ບຸນປອນ | ໂພນທອງ |
| 1.3 ການຍົກສະມັດຕະພາບເຂົ້ານາປີ ແລະ ນາແຊງ | ບຸນມາ | ໂພນທອງນາງອນ,ນາງົ້ວ,ບວກ ຄຳ |
| 1.4 ການທອນງົວ ແລະ ການປະສົມພັນທຽມງົວ | ມິດ | ສູນບໍລິການ |
| 1.5 ການສ້າງສວນຫຍ້າສາທິດຂອງຂອງສູນ | ມິດ | ສູນບໍລິການ |
| 1.6 ການໃຫ້ບໍລິການສັດຕະວະແພດ | | |
| **2. ກິດຈະກຳດ້ານສື່ສານ ແລະ ຂໍ້ມູນຂ່າວສານ** | | |
| 2.1 ການສ້າງກະດານຂ່າວ | ນາງ ແສງດາວອນ | ໂພນທອງ |
| 2.2 ຜະລິດແຜນພັບ | ນາງ ແສງດາວອນ | ໂພນທອງ |

| | | |
|---|---|---|
| 3. ການຕະຫຼາດ ແລະ ຊ່ວຍເຫຼືອກຸ່ມຊາວກະສິກອນ | | |
| 3.1 ຈັດການປະຊຸມລະຫ່ວາງຊາວກະສິກອນ ແລະ ພໍ່ຄ້າ | | |
| 3.2 ພົວພັນກັບພາກສ່ວນການຄ້າ ແລະ ອຸດສາຫະກຳເພືອຊອກຫາບ່ອນຈຳໜ່າຍຜົນຜະລິດ | | |

2. ເມືອງວຽງຄຳ

| ກິດຈະກຳ | ຮັບຜິດ ຊອບ | ເວລາໃດ | ຄວາມຕ້ອງການດ້ານອຸປະກອນ |
|---|---|---|---|
| **1. ການຝຶກອົບຮົມ, ການສາທິດ ແລະ ການສະໜອງແນວພັນ ແລະ ສິ່ງນຳເຂົ້າ** | | | |
| 1.1 ເຝິກອົບຮົມດ້ານເຕັກນ ກວິທີການປູກ, ບົວ ລະບັດຮັກສາ, ການເກັບກູ້ ຄັ່ງ | ທ. ທອງ | ເດືອ 3-4 | ປື້ມຄູ່ມື, ມີດຄັດເຕີ, ຢາປ້ອງກັ ສັດຕູພືດ |
| 1.2 ເຝິກອົບຮົມເຕັກນິກການປຸງແຕ່ງ ອາຫາສັດໃຊ່ວງລະດູ ແລ້ງ ໃຫ້ຊາວ ກະສິກອນ | ຄຽງຝັນ ແລະ ທ.ນ້ອຍ | ເດືອ 8-9 | ເຄື່ອງຈັກປັ່ຫ້ຍາ |
| 1.3 ເຝິກອົບຮົມເຕັກນິກການປະສົມ ພັນປາໃຫ້ຊາວກະສິກອນ | ທ. ແສງແກ້ວ | ເດືອ 3 | ຊຸດເພີເຟັກ, ອົກຊີ |
| 1.4 ການສ້າງສວສາທິດການປູກເຂົ້າພັນປັບປຸງ(ເຂົ້ານິກ, ລາບນູ) | ທ. ພອນໄຊ | ເດືອ 4 | ແນວພັນເຂົ້າ |
| 1.5 ສະໜອງແນວພັນຄັ່ງ | ທ. ທອງ | ເດືອ 6 | |
| **2. ກິດຈະກຳດ້ານສື່ສານ ແລະ ຂໍ້ມູນຂ່າວສານ** | | | |
| 2.1 ກາສ້າງກະດາຂ່າວ | ຄຽງຝັນ | ເດືອ 3 | - ອຸປະກອນການສ້າງກະດານຂ່າວ. |
| 2.2 ການຜະລິດຂໍ້ມູນຂ່າວສານ | .ຄຽງຝັນ | ທຸກໆເດືອ | ປື້ມຄູ່ມື, ເອກະສາຕ່າງໆ |
| **3. ການຕະຫຼາດ ແລະ ຊ່ວຍເຫຼືອກຸ່ມຊາວກະສິກອນ** | | | |
| 3.1 ການປູກໄມ້ລ້ຽງຄັ່ງ | ທ. ທອງ | ເດືອ 6 | ປື້ມຄູ່ມື |

| | | | |
|---|---|---|---|
| 3.2 ສຶກສາຕ່ອງໂສ້ກາຕະຫຼາດຂອງຄັ່ງ | ທ. ທອງ | ເດືອ 6 | ປື້ມຄູ່ມື |

## 3. ເມືອງນາໝໍ້

| ກິດຈະກໍາ | ແມ່ນໃຜຮັບຜິດ ຊອບ | ເວລາໃດ | ງົບປະມານ | ຄວາມຕ້ອງການດ້ານອຸປະກອນ |
|---|---|---|---|---|
| **1. ການຝຶກອົບຮົມ, ການສາທິດ ແລະ ການສະໜອງແນວພັນ ແລະ ສິ່ງນໍາເຂົ້າ** | | | | |
| 1.1ປູກຖົ່ວສະໄຕໂລສັບຫວ່າງຢາງພາລາ | TSC | ເດືອນ5/09 | 2,000,000 | ແນວພັນຖົ່ວສະໄຕໂລ |
| 1.2 ຕິດຕາມ ແລະ ຂະຫຍາຍແນວພັນຊາ | TSC | ເດືອນ6/09 | 5.000.000 | ອຸປະກອນການຂະຫຍາຍແນວພັນຊາ |
| 1.3 ຂະຫຍາຍແນວພັນໄມ້ໃຫ້ໝາກ | TSC | ເດືອນ3/09 | 5,000,000 | ອຸປະກອນການຂະຫຍາຍໄມ້ໃຫ້ໝາກ |
| 1.4 ຕິດຕາມການຂະຫຍາຍກຸ່ມລ້ຽງງົວ ແລະ ແບ້ | TSC | ເດືອນ 3/09 | 2,000,000 | |
| 1.5 ການປູກໄມ້ໃຫ້ໝາກ | TSC | ເດືອນ6/09 | 10,000,000 | ອຸປະກອນການປູກ |
| 1.6 ຕິດຕາມແລະຂະຫຍາຍແນວພັນເຂົ້າບົກແລະເຂົ້ານາ | TSC | ເດືອນ6/09 | 2,000,000 | ແນວພັນ |
| **2. ກິດຈະກໍາດ້ານສື່ສານ ແລະ ຂໍ້ມູນຂ່າວສານ** | | | | |
| 2.1 ຕັ້ງກະດານຂ່າວ | TSC | ເດືອນ 3/09 | 5,000,000 | ໂປຣດເຕີ,CDເຕັກນິກວິຊາການ |
| 2.2 ການຜະລິດຂໍ້ມູນຂ່າວສານ | TSC | ທຸກໆເດືອນ | 5,000,000 | |
| 2.2 ຈັດໃຫ້ຊາວກະສິກອນມີການແລກປ່ຽນບົດຮຽນ ເຊິ່ງກັນ ແລະ ກັນ | TSC | ເດືອນ 8/09 | 5,000,000 | |
| **3. ການຕະຫຼາດ ແລະ ຊ່ວຍເຫຼືອກຸ່ມຊາວກະສິກອນ** | | | | |
| 3.1 ຊ່ວຍຊາວກະສິກອນໃນການຈັດຕັ້ງກຸ່ມການລ້ຽງສັດພາຍໃນກຸ່ມບ້ານ | TSC | ເດືອນ4/09 | 2,000,000 | ຮ່າງກົດລະບຽບ,ແນວພັນ |
| 3.2 ຊ່ວຍຈັດຕັ້ງກຸ່ມປູກມອນລ້ຽງມອນ ແລະ ຕະຫຼາດຈໍາໜ່າຍ | TSC | ເດືອນ4/09 | 1,000,000 | ຄູ່ມື,ຮ່າງກົດລະບຽບ |

| | | | | |
|---|---|---|---|---|
| 3.3 ລົງແນະນຳຊາວກະສິກອນເຮັດສັນຍາການປູກພືດລະດູແລ້ງກັບນັກທຸລະກິດ | TSC | ເດືອນ3/09 | | ຮ່າງກົດລະບຽບ |

## 4. ເມືອງຮຸນ

| ລ/ດ | ກິດຈະກຳ | ຜູ້ຮັບຜິດຊອບ | ເວລາ ຈັດຕັ້ງປະຕິບັດ | ສະຖານທີ່ | ງົບປະມານ |
|---|---|---|---|---|---|
| *1* | *ກາຝຶກອົບຮົມ, ສາທິດ ແລະ ກາສະໜອງແນວພັນ ແລະ ສິ່ງຳເຂົ້າ* | | | | *x1000ກີບ* |
| 1.1 | ກາລ້ຽງສັດ | | | | |
| 1.1.1 | ສຳຫຼວດຄວາມເປັໄປໄດ້ໃການລ້ຽງສັດ | ສີທົນ | 12.08-1.09 | ມົກໄປູ,ຫ້ວຍພະ | 6,000 |
| 1.1.2 | ສາທິດການປູກຫຍ້າລ້ຽງງົວ | ສົມນິດ | 5.09 | ມົກໄປູ | 4,000 |
| 1.1.3 | ສາທິດການປູກຫຍ້າລ້ຽງແບ້ຂັງ | ສົງນີ | 5-12.09 | ຫ້ວຍພະ | 6,000 |
| 1.1.4 | ປູກຫຍ້າຜະລິດແກນ່ພັນ | ສົມນິດ | 5-12.09 | ສູວັງລ່ຳ | 3,000 |
| 1.1.5 | ສ້າງສວນກ້າເບ້ຍໄມ້ | ແກ້ວ,ສີອຳພອນ | 2-3.09 | ສູວັງລ່ຳ | 50,000 |
| 1.1.6 | ຈັດຊື້ອຸປະກອສວນກ້າ | ແກ້ວ,ສີອຳພອນ | 3.09 | ອຸດົມໄຊ | 50,000 |
| 1.1.7 | ຈັດຊື້ອຸປະກອສັດຕະວະແພດ | ສີທົນ | 3.09 | | |
| 1.2 | ພືດຜັກ ແລະ ໄມ້ໃຫ້ໝາກ | | | | |
| 1.2.1 | ສາທິດການປູກພືດຜັກນອກລະດູ | ໄພ | 7-12.09 | ງາໂຮມ,ງາໂຄ້ງ | 6,000 |
| 1.2.2 | ສ້າງສວນລວມພໍ່ແມ່ພັໄມ້ແບບປະສົມປະສາ | ແກ້ວ | 3.09 | ສູວັງລ່ຳ | 4,000 |
| 1.3 | ສາລີ | | | | |
| 1.3.1 | ສາທິດເຕັກິກກາຜະລິດສາລີໃກາໝູວຽກັບພືດເສດຖະກິດອື່ໆ/ກາປະເມີແບບມີສ່ວນຮ່ວມ | ແກ້ວ | 6.09 | ມົກໄປູ,ກິ່ວຍາບ | 6,000 |
| 1.3.2 | ສາທິດກາຜະລິດສາລີໂດຍການນຳໃຊ້ເຕັກິກSCV | ແກ້ວ | 6.09 | ອຸດົມ | 6,000 |
| 1.3.3 | ສຶກສາ ແລະ ທົດລອງກ່ຽວກັບກຸ່ມກາຜະລິດສາລີ ຫຼື ສະມາຄົມຊາວກະສິກອນ | | 4.09 | ເມືອງຮຸ | 3,000 |

| | | | | | |
|---|---|---|---|---|---|
| 1.3.4 | ເຮັດກາປະເມີແບບມີສ່ວນຮ່ວມກັບຊາວາທີ່ຜະລິດສາລີ | ອ່ອຕາ | 12.09 | ເມືອງຮຸ | 3,000 |
| 1.3.5 | ສຶກສາຕະຫຼາດສາລີ, ລາຄາ ແລະ ຕ່ອງໂສ້ກາຕະຫຼາດພາຍໃເມືອງຮນຸ | ພີນ | 12.09 | ເມືອງຮຸ | 3,000 |
| 1.4 | ຖົ່ວ | | | | |
| 1.4.1 | ທົດລອງກາຜະລິດຖົ່ວເພື່ອເປັທາງເລືອກົ່ງອກຈາກກາປູກສາລີ | ໄພ | 3-9.09 | ມີກໄຼ,ກົ້ວຍາບ | 6,000 |
| 1.4.2 | ເຮັດກາປະເມີແບບມີສ່ວຮ່ວມກັບຊາວນາທີ່ປູກຖົ່ວ | ສີອຳພອນ | 6-10.09 | ເມືອງຮຸ | 3,000 |
| 1.5 | ກາກະກຽມປັດໃຈກາລົງທືເລື່ອງກາຄົ້ຄວ້າທົດລອງ | | | | |
| 1.5.1 | ວຽກງານສວກ້າ ແລະ ກາຄຸ້ມຄອງ | | | | |
| 1.5.2 | ຈັດຊື້ປັດາປັດໃຈທີ່ຈະໃຊ້ໃກາຄົ້ຄວ້າທົດລອງ (ແວພັ, ເບ້ຍໄມ້, ສັດ, ປຸ໋ຍ, ເຄື່ອງມື, ອຸປະກອ, ຢາວັກຊີ, ກາສັກຢາວັກຊີ, ແລະ ອື່ໆ) | ສີທົນ,ໄພ,ພີນ | 3. 09 | ເມືອງຮຸນ,ແຂວງ | |
| 1.6 | ເຂົ້າໄຮ່ | | | | |
| 1.6.1 | ສາທິດ ແລະ ຄັດເລືອກແວພັເຂົ້າບົກທີ່ເໝາະສົມກັບທ້ອງຖິ່ | ພີນ | 6.09 | ເມືອງຮຸນ,ແຂວງ | |
| 1.6.2 | ສາທິດລະບົບກາຳໃຊ້ ແລະ ແລກປ່ຽແວພັເຂົ້າບົກຊາວາກັບຊາວກະສິກອນ | ອ່ອນຕາ | | ມີກໄຼ,ກົ່ວຍາບ | |

## 5. ເມືອງນາແລ

| ກິດຈະກຳ | ສະຖານທີ່ | ຮັບຜິດ ຊອບ | ເວລາໃດ | ງົບປະມານ | ຄວາມຕ້ອງການດ້ານອຸປະກອນ |
|---|---|---|---|---|---|
| **1. ການຝຶກອົບຮົມ, ການສາທິດ ແລະ ການສະໜອງແນວພັນ ແລະ ສິ່ງນຳເຂົ້າ** | | | | | |
| 1.1 ຝຶກອົບຮົມການປູກເຂົ້ານາປີ | ກຸ່ມບ້ານເລົາ | ກອງສິນ+ແພງວັນ | May-09 | 3,000,000 | ອຸປະກອນຮັບໃຊ້ໃນການຝຶກ |
| 1.2 ຝຶກອົບຮົມການປູກຫຍ້າອາຫານສັດ | ກຸ່ມບ້ານເລົາ-ພູຈະແລ | ໄຊສະຫວາດ+ປ້ອມ | Mar-09 | 3,000,000 | ແນວພັນຫຍ້າ,ອຸປະກອນຮັບໃຊ້ໃນການຝຶກ |
| 1.3 ຝຶກການຄັດເລືອກແນວພັນເຂົ້າບົກ ແລະ ເຂົ້ານາ | ກຸ່ມບ້ານເລົາ-ພູຈະແລ | ຄຳລ້ອນ | May-09 | 3,000,000 | ອຸປະກອນຮັບໃຊ້ໃນການຝຶກ |
| 1.4 ປູກໄມ້ໃຫ້ໝາກ | ສູນບ້ານແວນ | ລັງ | Jun-09 | | ແນວພັນໄມ້ໃຫ້ໝາກ |

| | | | | | |
|---|---|---|---|---|---|
| | | | | 18,000,000 | |
| 1.5 ລ້ຽງໝູຊຸມ | ສູນບ້ານແວນ | ວັນແສງ+ສົມພົງ | Mar-09 | 20,000,000 | ແນວພັນໝູ,ອຸປະກອນການສ້າງຄອກ ຢາປ້ອງກັນ ປິ່ນປົວ |
| 1.6 ປູກຫຍ້າລ້ຽງສັດ | ສູນບ້ານແວນ | ຫລ້າ+ສົມພົງ | May-09 | 5,000,000 | ແນວພັນຫຍ້າ |
| 1.7 ສາທິດການເຮັດກ້ອນແຮ່ທາດ | ສູນບ້ານແວນ | ສີດາ | Mar-09 | 2,000,000 | ອຸປະກອນຮັບໃຊ້ ແລະ ວັດຖຸດິບ |
| **2. ກິດຈະກຳດ້ານສື່ສານ ແລະ ຂໍ້ມູນຂ່າວສານ** | | | | | |
| 2.1. ການສ້າງກະດານຂ່າວບ້ານ | ບ້ານແວນ, ບ້ານເລົາ | ນ. ໜື່ງຮັກ | Apr-09 | 5,000,000 | ອຸປະກອນຮັບໃຊ້ |
| 2.2. ການຜະລິດຂໍ້ມູນຂ່າວສານ | ສູນບ້ານແວນ | ນ. ໜື່ງຮັກ | ທຸກໆເດືອນ | 3,000,000 | ອຸປະກອນຮັບໃຊ້ |
| 2.3. ສ້າງ ແລະ ປັບປຸງຫ້ອງສະມຸດ (ຖົງປັນຍາ ) | ສູນບ້ານແວນ | ນ. ໜື່ງຮັກ | Apr-09 | 10,000,000 | ອຸປະກອນຮັບໃຊ້ |

## 6. ເມືອງວຽງພູຄາ

| ລ/ດ | ກິດຈະກຳ | ຮັບຜິດຊອບ | ເວລາໃດ | ສະຖານທີ່ | ງົບປະມານ | ຄວາມຕ້ອງການດ້ານອຸປະກອນ |
|---|---|---|---|---|---|---|
| **1. ການຝຶກອົບຮົມ, ການສາທິດ ແລະ ການສະໜອງແນວພັນ ແລະ ສິ່ງນຳເຂົ້າ** | | | | | | |
| 1.1 | ການປູກຫັຍາພືດອາຫານສັດເພື່ອລ້ຽງແບ້ | ທ. ສີທະວອນ | ເດືອນ3 | ບ.ນ້ຳແພ | 6.000.000 | ແນວພັນ, ອຸປະກອນ |
| 1.2 | ການປູກຫັຍາພືດອາຫານສັດເພື່ອລ້ຽງແບ້ | ທ.ແກ້ວມີໄຊ | ເດືອນ3 | ບ.ປາງຊາຍ | 5.000.000 | ແນວພັນ, ອຸປະກອນ |

| | | | | | | |
|---|---|---|---|---|---|---|
| 1.3 | ການປູກຫຍ້າພືດອາຫານສັດ | ນ. ສີອຳໄພ | ເດືອນ3 | ສູນເຕັກນິກບໍລິການ | 4.000.000 | ແນວພັນ, ອຸປະກອນ |
| 1.4 | ການປູກພືດຜັກປະສົມປະສານຕະຫລອດປີ | ທ.ພານຸລັດ | ເດືອນ3 | ສູນເຕັກນິກບໍລິການ | 5.000.000 | ແນວພັນ, ອຸປະກອນ |
| 1.5 | ສ້າງສວນໄມ້ໃຫ້ໝາກ | ທ.ໄຊພອນ | ເດືອນ3 | ສູນເຕັກນິກບໍລິການ | 15.000.000 | ແນວພັນ, ອຸປະກອນ,ເບ້ຍໄມ້,ຝຸ່ນປຸຍ |
| 1.6 | ກ້າເບ້ຍໄມ້ຕ່າງໆ | ນໃສມະນີ | ເດືອນ3 | ສູນເຕັກນິກບໍລິການ | 6.000.000 | ຝຸ່ນ,ປຸຍ,ຖົງຢາງ,ສານເລັ່ງຮາກ,ແກ່ນໄມ້ຕ່າງໆ |
| 1.7 | ການທົດລອງນຳໃຊ້ແນວພັນເຂົ້າໄຮ່ | ທ.ໂຕ່ | ເດືອນ4 | ບ.ໂພນທອງ | 3.000.000 | ແນວພັນໃໝ່ |
| 1.8 | ການຜະລິດເມັດພັນເຂົ້າລຸ້ນ 3 | ທ.ໂຕ່ | ເດືອນ5 | ບ.ນ້ຳຟ້າ,ສະໂກນ | 6.000.000 | ແນວພັນ,ອຸປະກອນ |
| 1.9 | ທັດສະນະຖອດຖອນບົດຮຽນລະຫ່ວາງກຸ່ມຊາວນາ | ທອງວັນ | ເດືອນ8 | ບ້ານຕ່າງໆ | 8.000.000 | |
| **2. ກິດຈະກຳດ້ານສື່ສານ ແລະ ຂໍ້ມູນຂ່າວສານ** | | | | | | |
| 2.1 | ກະດານຂ່າວ | ທ.ຄຳສົນ | ເດືອນ5 | ບ.ໂພນທອງ,ນ້ຳແພ | 4.500.000 | ໄມ້,ສັງກະສີ,ແປ້ນອັດ,ຕາໜາງ,ເຫລັກຕະປູ,ຄ້ອນຕີ |
| 2.2 | ການວາງສະແດງຜົນຜະລິດ | ທອງວັນ | ເດືອນ 11 | ບ. ນ້ຳຟ້າ | 5.000.000 | |
| 2.3 | ສ້າງເອກະສານ | ທອງວັນ | ເດືອນ 9 | ສູນເຕັກນິກບໍລິການ | 6.000.000 | ປຶ້ມ,ເຈ້ຍ |
| 2.3 | ລົງເຜີຍແພ ເອກະສານກ່ຽວກັບພາລະບົດບາດແລະເກັບຂໍ້ມູນຕ່າງໆ | ພູມອນ | ເດືອນ 3 | ກຸ່ມບ້ານ | 8.000.000 | ເອກະສານຕ່າງໆ |
| **3. ການຕະຫຼາດ ແລະ ຊ່ວຍກຸ່ມຊາວກະສິກອນ** | | | | | | |
| 3.1 | ສຶກສາຕ່ອງໂສ້ການຕະຫຼາດສາລີ | ທ. ພູມອນ | ເດືອນ 8 | ເມືອງວຽງພູຄາ | 6.000.000 | |

7. ເມືອງຜາອຸດົມ

| ກິດຈະກຳ | ຮັບຜິດ ຊອບ | ເວລາໃດ | ສະຖານທີ່ | ງົບປະມານ X 1000 ກີບ |
|---|---|---|---|---|
| 1. ການຝຶກອົບຮົມ, ການສາທິດ ແລະ ການສະໜອງແນວພັນ ແລະ ສິ່ງນຳເຂົ້າ | | | | |
| 1.1 ປູກທັຍາອາຫານສັດ( ຜະລິດແກ່ນແນວພັນ ) | ທ້າວ ໄຊແກ້ວ | ມີນາ | ສູນປຸງລາດ | 15,000 |
| 1.2 ປູກທັຍາ ລ້ຽງແບ້ | ນາງ ຄຳຟອງ | ມີນາ | ສູນປຸງລາດ | 15,000 |
| 1.3 ປະສົມພັນ ແລະ ຜະລິດ ລູກປາ | ນາງ ບຸນພາມາ | ເມສາ | ສູນປຸງລາດ | 20,000 |
| 1.4 ປະສົມພັນ ແລະ ຜະລິດລູກກົບ | ນາງ ບຸນພາມາ | ເມສາ | ສູນປຸງລາດ | 20,000 |
| 1.5 ປູກໄມ້ໃຫ້ໝາກ ( ສວນຂະຫຍາຍແນວພັນ ) | ທ້າວ ຈັນທະຈອນ | ມີນາ | ສູນປຸງລາດ | 15,000 |
| 1.6 ປູກຢາງພາລາ ປະສົມກັບພືດເສດຖະກິດ | ທ້າວ ໄພສອນ | ເມສາ | ສູນປຸງລາດ | 15,000 |
| 1.7 ສ້າງສວນກ້າ ຜະລິດເບັ້ຍໄມ້ | ທ້າວ ພອນ | ມີນາ | ສູນປຸງລາດ | 25,000 |
| 1.8 ຍົກສະມັດຕະພາບ ແນວພັນເຂົ້າ | ທ້າວ ແດງວັນ | ພຶດສະພາ | ບ້ານຖິ່ນແກ້ວ&ຫ້ວຍສັງ | 8,000 |
| 1.9 ປູກຜັກນອກລະດູການ(ລະດູຝົນ) | ທ້າວ ບຸນສອນ | ເມສາ | ບ້ານຖິ່ນແກ້ວ | 7,000 |

| | | | | |
|---|---|---|---|---|
| **2. ກິດຈະກຳດ້ານສື່ສານ ແລະ ຂໍ້ມູນຂ່າວສານ** | | | | |
| 2.1 ສ້າງ ຫ້ອງສະມຸດຂະໜາດນ້ອຍ | ທ້າວ ພອນ | ພຶດສະພາ | ສູນປຸງລາດ | 6,000 |
| 2.2 ລົງໂຄສະນາ ເຜີຍແຜ່ ສ້າງແຮງຈູງໃຈ ໃຫ້ຊາວກະສິກອນ ຫັນມາ ( ປູກ-ລ້ຽງ ) ໂດຍນຳໃຊ້ເຕັກນິກເຂົ້າມາຊ່ວຍ | ທ້າວ ຈັນທະຈອນ | ເມສາ | ກຸ່ມບ້ານ ປຸງລາດ | 30,000 |
| 2.1 ລົງໂຄສະນາ ເຜີຍແຜ່ ສ້າງແຮງຈູງໃຈ ໃຫ້ຊາວກະສິກອນ ຫັນມາ( ປູກ-ລ້ຽງ ) ໂດຍນຳໃຊ້ເຕັກນິກເຂົ້າມາຊ່ວຍ | ທ້າວ ຈັນທະຈອນ | ເມສາ | ເມືອງຜາອຸດົມ | 10,000 |
| 2.3 ສ້າງ ກະດານຂ່າວ | ທ້າວ ໄພສອນ | ເມສາ | ກຸ່ມບ້ານ ປຸງລາດ | 10,000 |
| **3. ການຕະຫຼາດແລະຊ່ວຍເຫຼືອກຸ່ມຊາວກະສິກອນ** | | | | |
| 3.1 ຊ່ວຍເຫຼືອກຸ່ມ ຮ່າງກົດລະບຽບ,ຂໍ້ກຳນົດ ແລະ ຄຳແນະນຳການ ຈັດການ ແລະ ຄຸ້ມຄອງກຸ່ມ | ທ້າວ ໄພສອນ | ເມສາ | ກຸ່ມບ້ານ ປຸງລາດ | 5,000 |
| 3.1 ຊ່ວຍເຫຼືອກຸ່ມ ຮ່າງກົດລະບຽບ,ຂໍ້ກຳນົດ ແລະ ຄຳແນະນຳການຈັດການ ແລະ ຄຸ້ມຄອງກຸ່ມ | ທ້າວ ພອນ | ເມສາ | ກຸ່ມບ້ານ ປຸງລາດ | 5,000 |
| 3.2 ເຮັດການວິເຄາະ ຄວາມຕ້ອງການຂອງຕະຫຼາດ ສຳລັບພືດ ທີ່ມີທ່າແຮງ | ນາງ ປິ່ນແກ້ວ | ມິຖຸນາ | ເມືອງຜາອຸດົມ | 4,000 |

## 8. ເມືອງເມິງ

| ລະຫັດ | ກິດຈະກຳ | ຜູ້ຮັບຜິດຊອບ | ສະຖານທີ່ | ເວລາ/ເດືອນ | ງົບປະມານ | ຄວາມຕ້ອງການດ້ານອຸປະກອນ |
|---|---|---|---|---|---|---|
| **1. ການຝຶກອົບຮົມ ການສາທິດ ແລະ ການສະໜອງແນວພັນ ແລະ ສິ່ງນຳເຂົ້າ.** | | | | | | |

| | | | | | | |
|---|---|---|---|---|---|---|
| 1.1 | ຝຶກອົບຮົມການປູກຫຍ້າ,ການດູແລຮັກສາສັດລ້ຽງ,ຕາມເຕັກນິກວິຊາການ ໃຫ້ແກ່ຊາວບ້ານ | | ຊຽງດາວ | 3-6 | 3.000.000 | ປື້ມຄູ່ມືການປູກຫຍ້າ,ລ້ຽງສັດ |
| 1.2 | ຕິດຕໍ່ ແລະ ຈັດຊື້ແນວພັນຕາມກິດຈະກຳຕົວຈິງ | | ຊຽງດາວ | | | |
| 1.2.1 | ແນວພັນສັດລ້ຽງ ງົວ | ພູມມະຈັນ | ຊຽງດາວ | 3-8 | 6.000.000 | |
| 1.2.2 | ແນວພັນຫຍ້າ | ພູມມະຈັນ | ຊຽງດາວ | 3-6 | 8.000.000 | |
| 1.2.3 | ແນວພັນໝູ | ພູມມະຈັນ | ຊຽງດາວ | 3-6 | 1.500.000 | |
| 1.2.4 | ອຸປະກອນການລ້ຽງສັດ | ຄຳພູວັນ | ຊຽງດາວ | 3-7 | 6.000.000 | |
| 1.2.5 | ແນວພັນເບ້ຍໄມ້ໃຫ້ໝາກ | ພົງສະຫວັນ | ຊຽງດາວ | 3-8 | 12.000.000 | |
| 1.2.6 | ແນວພັນເບ້ຍໄມ້ອູດສາຫະກຳ (ຢາງພາລາ) | ພົງສະຫວັນ | ຊຽງດາວ | 3-8 | 2.000.000 | ປື້ມຄູ່ມືການປູກໄມ້ອູດສາຫະກຳ |
| 1.2.7 | ຝຶກອົບຮົມການວາງແຜນນຳໃຊ້ທີ່ດິນ ແລະ ແນວທາງການຄຸ້ມຄອງ | ຄຳພູວັນ | ຊຽງດາວ | 3-9 | 5.000.000 | |
| 1.3 | ສະໜອງແນວພັນພືດໃຫ້ແກ່ຊາວກະສິກອນຕາມຈຳນວນຕ້ອງການຢູ່ສູນ | | | | | |
| 1.3.1 | ເຂົ້າບົກ | ສຸລິໄຊ | ປຸງຈອມແສງ | 3-6 | 6.500.000 | ປື້ມຄູ່ມືການປູກເຂົ້າ |
| 1.3.2 | ຖົ່ວເຫຼືອງ | ສີພອນ | ຊຽງດາວ | 3-7 | 1.000.000 | ປື້ມຄູ່ມືການປູກຖົ່ວເຫຼືອງ |
| 1.4 | ການຜະລິດເບ້ຍໄມ້ໃນສວນກ້າ | ພົງສະຫວັນ | ຊຽງດາວ | 3-8 | 25.000.000 | |
| 1.5 | ການກໍ່ສ້າງອຸ່ງໃສ່ນ້ຳ ໃນສູນ | ຄຳພູວັນ | ຊຽງດາວ | 3-6 | 7.000.000 | |
| **2. ກິດຈະກຳດ້ານການສືສານ ແລະ ຂໍ້ມູນຂ່າວສານ** | | | | | | |
| 2.1 | ຫໍຂ່າວ ( ກະດານຂ່າວ ) | ອິ້ນລີໄທ+ຄຳພູວັນ | ຊຽງດາວ | 3-12 | 5.000.000 | ກະດານ,ປື້ມຄວາມຮູ້, ຂ່າວສານ |
| 2.2 | ສ້າງໂປດສະເຕີ ແລະ ແຜ່ນພັບ | ອິ້ນລີໄທ+ຄຳພູວັນ | ຊຽງດາວ | 3-12 | 1.000.000 | |
| 2.3 | ລົງໂຄສະນາເຜີຍແຜ່ຂໍ້ມູນຂ່າວສານດ້ານກະສິກຳ | | ຊຽງດາວ | 3-12 | 1.000.000 | |

| | | | | | | |
|---|---|---|---|---|---|---|
| 2.4 | ສ້າງຖົງປັນທຍາກະສິກຳ | | ຊຽງດາວ | 3-12 | 1.000.000 | |
| **3. ການຕະຫຼາດ ແລະ ຊ່ວຍເຫຼືອກຸ່ມຊາວກະສິກອນ.** | | | | | | |
| 3.1 | ເປີດຕະລາດນັດໃຫ້ແກ່ກຸ່ມບ້ານທຸກ ໆ ເດືອນ | ຄຳພູວັນ | ຊຽງດາວ | 3-12 | | |
| 3.2 | ສຶກສາຕ້ອງໂສ້ການຕະຫຼາດທັງພາຍໃນ ແລະ ຕ່າງປະເທດ( ຊາປ່າ ) | ສາມິດ | ຊຽງດາວ | 3-12 | 10.000.00<br>0 | |

*ເອກະສານແບບທ້າຍ 4 ການຈັດສະຖານທີ່ ກ່ຽວກັບການສ້າງເອກະສານ, ການຕິດຕາມກວດກາ ແລະ ການລາຍງານ ໂດຍແບ່ງອອກເປັນ 4 ກຸ່ມ*

ກຸ່ມທີ່2: ການສື່ສານລະດັບທ້ອງຖິ່ນ

| ບົດຮຽນຫຼືປະສົບການທັຍງທີ່ສູນຂອງທ່ານຕ້ອງການ ແລະ ຢາກຕ້ອງການເຮັດເປັນເອກກະສານ | ມີກິດຈະກຳການສື່ສານທັຍງທີ່ທ່ານຢາກເຮັດເພື່ອປັບປຸງການແລກປ່ຽນຊາວກະສິກອນ-ຊາວກະສິກອນ-ພະນັກງານ |
|---|---|
| 1. ເຕັກນິກການປູກພືດອາຫານສັດ | 1. ການສື່ສານທາງໂທລະໂຄ່ງ |
| 2. ເຕັກນິກການຜະລິດຫົວອາຫານສັດນ້ອຍ | 2. ການສື່ສານທາງຕູ້ເອກກະສານ |
| 3. ເຕັກນິກການປູກຜັກກະລຳປີ ແລະ ໝາກເຫຼັ່ນນອກລະດູ | 3. ກະດານຂ່າວບ້ານ |
| 4. ວິທີການເຮັດກ້ອນແຮທາດ | 4. ການສາຍຊີດີ/ໂທລະພາບ |
| 5. ເຕັກນິກການປູກໄມ້ໃຫ້ໝາກແບບປະສົມປະສານ | 5. ຖົງປັນຍາ |
| 6. ການສ້າງເອກກະສານຄອບຄົວຕົວແບບ | 6. ລະຄອນເວທີ |
| 7. ວິທີການຍ້ອມໃໝແບບພື້ນເມືອງ | 7. ດ້ານຮູບພາບ |
| 8. ເຕັກນິກການຜະລິດໝາກໄມ້ນອກລະດູ | 8. ຕະຫຼາດນັດການວາງສະແດງຜົນຜະລິດກະສິກຳ |

| | |
|---|---|
| 9. ວິທີການປິ່ນປົວພະຍາດປາກເປື່ອຍ-ເຈັບທ້ອງ(ແບ້)<br>10. ເຕັກນິກການປູກຢາງພາລາປະສົມກັບພືດເສດຖະກິດ<br>11. ການປູກຫຍ້າສະໄຕໂລຮ່ວມກັບຢາງພາລາ<br>12. ການຈັດການ ແລະ ການບໍລິຫານກຸ່ມລ້ຽງງົວ<br>13. ເຕັກນິກການຈັດການ ແລະ ການບໍລິຫານສວນກ້າ<br>14. ປະຕິທິນການຈັດຕັ້ງປະຕິບັດກິດຈະກຳການລ້ຽງງົວ<br>15. ເຕັກນິກການຈັດຕັ້ງກຸ່ມປູກກະລຳປີ<br>16. ເຕັກນິກການປູກໄມ້ເພື່ອລ້ຽງຄັ່ງ<br>17. ເຕັກນິກການປູກໝາກເຍົາ<br>18. ເຕັກນິກການກ້າແກ່ນໄມ້ອຸດສາຫະກຳ<br>19. ເຕັກນິກການລ້ຽງມ້ອນ<br>20. ເຕັກນິກການປູກພືດນອກລະດູ<br>21. ການປູກພືດປັບປຸງດິນ(ຕະກຸນຖົ່ວ)<br>22. ການລ້ຽງໝູດ້ວຍອາຫານທີ່ມີໃນທ້ອງຖິ່ນ(ອາຫານໝັກ)<br>23. ການປູກມັນດ້າງ ແລະ ມັນຕົ້ນເພື່ອຮັກສາແນວພັນ | 9. ແຜນພັບ<br>10. ໂຄສະນາ ແລະ ເຜີຍແຜ່<br>11. ທັດສະນະສຶກສາ |

ກຸ່ມທີ່ 4 : ການເອື້ອອຳນວຍກຸ່ມຊາວກະສິກອນ

| **ປະຊາຊົນມີບັນຫານຫຍັງໃນການສ້າງຕັ້ງກຸ່ມ** | **ມີກິດຈະກຳຫຍັງແດ່ທີ່ສາມາດຊ່ວຍກຸ່ມຊາວກະສິກອນ** | **ຕ້ອງການຝຶກອົບຮົມດ້ານໃດແດ່** |
|---|---|---|
| 1. ຊາວກະສິກອນຍັງບໍ່ເຂົ້າໃຈວ່າກຸ່ມແມ່ນຫຍັງ<br>2. ການຕິດຕໍ່ພົວພັນຍັງບໍ່ທັນເປັນລະບົບ<br>3. ພາຍໃນກຸ່ມຍັງມີຄວາມຂັດແຍ່ງທາງດ້ານຜົນປະໂຫຍດ | 1. ຕອບສະໜອງຂໍ້ມູນຂ່າວສານທາງດ້ານຮູບພາບ<br>2. ໃຫ້ມີການສາຍຊີດີກ່ຽວກັບເລື້ອງວິຊາການເບິ່ງເພື່ອເຫັນກັບຕາ<br>3. ມີການຖອດຖອນບົດຮຽນລະຫວ່າງຊາວ | 1. ວິທີການສາວໄໝ<br>2. ວິທີການປູກໝາກໂມ<br>3. ວິທີການຮັກສາສຸຂະພາບສັດ<br>4. ວິທີການປຸງແຕ່ງອາຫານສັດ(ລະດູແລ້ງ)<br>5. ວິທີການຄຸ້ມຄອງບໍລິຫານກຸ່ມ |

| | | |
|---|---|---|
| 4. ກຸ່ມຍັງບໍ່ປະຕິບັດຕາມລະບຽບທີ່ສ້າງຂຶ້ນມາ<br>5. ມີບັນຫາດ້ານການຕະຫຼາດ(ບໍ່ມີຕະຫຼາດຮອງຮັບຜົນຜະລິດ)<br>6. ການກຳນົດດ້ານນະໂຍບາຍຂອງກຸມຍັງບໍ່ຈະແຈ້ງ<br>7. ການຈັດຕັ້ງກຸ່ມການຜະລິດບໍ່ແມ່ນຊາວກະສິກອນເປັນຜູ້ລິເລີ້ມ | ກະສິກອນກັບຊາວກະສິກອນ<br>4. ຊ່ວຍຊຸກຍູ້ແນະນຳການນຳໃຊ້ລະບຽບທີ່ສ້າງຂຶ້ນມາ<br>5. ເຊື່ມໂຍງຊາວກະສິກອນ-ພໍ່ຄ້າ,ບໍລິສັດ(ການເຮັດເອກະສານສັນຍາ)<br>6. ຊ່ວຍວາງແຜນຮ່ວມກັບຊາວກະສິກອນ<br>7. ຊ່ວຍການສ້າງຕັ້ງກຸ່ມການຜະລິດ ແລະກຸ່ມເກັບຊື້<br>8. ຊ່ວຍສ້າງວິຊາການຂັ້ນບ້ານ | 6. ຝຶກອົບຮົມການເຂົ້າເຖິງຕະຫຼາດ<br>7. ວິທີການເກັບກຳຂໍ້ມູນດ້ານພູມປັນຍາຂອງທ້ອງຖິ່ນ<br>8. ວິທີການຂັ້ນບ້ານສະເພາະດ້ານ |

## ເອກະສານແນບທ້າຍ 5 ສິ່ງທີ່ທ່ານສົນໃຈຈະນຳເອົາໄປທົດສອບ ແລະ ການປະເມີນຜົນຂອງກອງປະຊຸມ

| ເມືອງ | ມີຫັຍງແດ່ທີ່ກັບເອົາໄປທົດສອບຢູ່ໃນກຸ່ມບ້ານຂອງທ່ານ | ທ່ານມີຂໍ້ຄິດເຫັນຫຍັງແດ່ສຳລັບກຸ່ມບ້ານໂພນທອງແລະກຸ່ມບ້ານນ້ຳບໍ່ |
|---|---|---|
| ເມືອງວຽງຄຳ | 1. ການສ້າງຕັ້ງແລະຄຸ້ມຄອງກຸ່ມຜະລິດ<br>2. ການປູກໄມ້ໃຫ້ໝາກ ແລະ ການປູກຜັກກະລຳປີ<br>3. ການທອມສັດ<br>4. ການປູກມອນລ້ຽງມ້ອນ<br>5. ການສາທິດການປູກຫ້ຍາລ້ຽງສັດໃຫ່ຍ | 1. ເພີ້ມພະນັກງານສະເພາະດ້ານຊ່ວຍຊາວກະສິກອນທາງດ້ານເຕັກນິກຕ່າງໆ<br>2. ລົງແກ້ໄຂຊ່ວຍຊາວກະສິກອນໂດຍທີ່ປະຊຸມກັບກຸ່ມຜະລິດ |
| ເມືອງ ນາໝໍ້ | 1. ການສາທິດໃນສູນ<br>2. ການຕັ້ງກະດານຂ່າວ<br>3. ການຈັດຕັ້ງກຸ່ມປູກ-ກຸ່ມລ້ຽງສັດ | 1. ເພີ້ມຂໍ້ມູນຂ່າວສານລົງໃນກະດານໃຫ້ເຕັມ<br>2. ເພີ້ມຄວາມເອົາໃຈໃສ່ໃນການລົງໃກ້ຊິດກັບກຸາມຜະລິດຕື່ມ |

| | | |
|---|---|---|
| ເມືອງ ຮຸນ | 1. ການວາງແບແລະການປະສານງານທີ່ຈະນຳໄປທົດສອບ<br>- ການສ້າງແຜນທົດລອງຄົ້ນຄ ້ວາຮ່ວມຄະນະກຸ່ມບ້ານ<br>- ຂັ້ນຕອນການວາງແຜນການປະຕິບັດກິດຈະກຳ<br>- ຂອດການປະສານງານລະຫ່ວາງເມືອງ-ສູນ-ກຸ່ມບ້ານ-ຜູ້ຜະລິດ-ເກັບຊື້<br>2. ການສາທິດ ແລະ ການຝຶກອົບຮົມ<br>- ການສ້າງບ່ອນສາທິດຢູ່ພາຍໃນສູນ<br>- ການສ້າງບ່ອນສາທິດໃນພື້ນທີ່ຊາວກະສິກອນ<br>- ການຝຶກອົບຮົມກັບພື້ນທີ່ຊາວກະສິກອນ<br>- ກຳນົດຫົວຂໍ້ທີ່ຈະຝຶກອົບຮົມໃຫ້ແທດເໝາະກັບຄວາມຕ້ອງການ,ພື້ນທີ່<br>3. ສະໜອງຂໍ້ມູນຂ່າວສານ<br>- ສ້າງຂໍ້ແນະນຳ,ແຜ່ນພັບດ້ານເຕັກນິກທີ່ເໝາະສົມໃຫ້ກັບຊາວກະສິກອນ<br>- ສ້າງຂໍ້ແນະນຳເຜີຍແຜ່ຜົນສຳເລັດຂອງຊາວກະສິກອນທີ່ມີປະສົບການ<br>- ສ້າງກະດານຂ່າວສານດ້ານຂໍ້ມູນ<br>4. ການສະໜັບສະໜູນຊາວກະສິກອນ<br>- ອຳນວຍຄວາມສະດວກປັດໃຈນຳເຂົ້າທີ່ບໍ່ມີໃນທ້ອງຖິ່ນ(ພືດ,ສັດ)<br>- ສະໜອງເຕັກນິກໃໝ່ທີ່ໄດ້ຮັບຜົນສຳເລັດ<br>5. ການເຊື່ອມໂຍງຊ່ວກະສິກອນແລະພໍ່ຄ້າ<br>- ສ້າງເຄືອຂ່າຍຕ່ອງໂສ້ການພົວພັນສື່ສານແລປ່ຽນບົດຮຽນລະຫ່ວາງພໍ່ຄ້າ-ຊາວກະສິກອນ-ພະນັກງານ | 1. ສືບຕໍ່ນຳເອົາຜົນສຳເລັດຂອງການສາທິດລົງສູ່ຊາວກະສິກອນຜູ້ທີ່ມີຄວາມສົນໃຈໃນເຂດຮັບຜິດຊອບແລະ ເຂດອື່ນ |
| ເມືອງ ນາແລ | 1. ການປູກໄມ້ໃຫ້ໝາກ<br>2. ການປູກພືດຜັກນອກລະດູ<br>3. ການລ້ຽງໝູຂຸມ | 1. ລົງຕິດຕາມການຜະລິດແລະຄວາມຕ້ອງການຂອງຊາວກະສິກອນດ້ານຂ່າວສານໃຫ້ປົກກະຕິ<br>2. ການຄຸ້ມຄອງກອງທຶນຂອງກຸ່ມ |

| | | |
|---|---|---|
| | 4. ການສ້າງກະດານຂ່າວ<br>5. ການປູກຫຍ້າລ້ຽງສັດ<br>6. ການສ້າງກຸ່ມລ້ຽງສັດ | |
| ເມືອງ ວຽງພູຄາ | 1. ກະດານຂ່າວ ແລະ ຂໍ້ມູນທີ່ຕິດໃນກະດານຂ່າວ<br>2. ການເຮັດນາກ້າກີບດຽວ<br>3. ການຊຸກູ້ຄອບຄົວຕົວແບບຜະລິດນອກລະດູ ແລະ ໃນລະດູ<br>4. ການເຮັດຕະຫຼາດນັດຂອງບ້ານ<br>5. ສ້າງໂຄງຮ່າງການຈັດຕັ້ງ | 1. |
| ເມືອງ ເມິງ | 1. ການຄຸ້ມຄອງບໍລິຫານຫ້ອງການ ແລະ ອົງການຈັດຕັ້ງ<br>2. ວິທີການສົ່ງເສີມການປູກໄມ້ໃຫ້ໝາກ<br>3. ການຕັ້ງກະດານຂ່າວໃຫ້ຊາວກະສິກອນໄດ້ເບິ່ງ | 1. ເພີ້ມຄວາມເອົາໃຈໃສ່ໃນການເຮັ້ດບົດບັນທຶກສັນຍາໃຫ້ກັບກຸ່ມຜະລິດ ແລະ ພໍ່ຄາໃຫ້ມັນຮັດກຸມຂື້ນຕື່ມ |
| ເມືອງ ຜາອຸດົມ | 1. ການວາງລະບຽບຂອງກຸ່ມລ້ຽງສັດໂດຍການມີສ່ວນຮ່ວມຂອງຊາວກະສິກອນກັບສູນ<br>2. ມີການແບ່ງຄວາມຮັບຜິດຊອບໃຫ້ພະນັກງານສູນຢ່າງຊັດເຈນ<br>3. ມີບ່ອນສາທິດໃນການປູກ-ລ້ຽງສັດ ຢູ່ໃນສູນໃຫ້ຊາວກະສິກອນໄດ້ເຫັນ | 1. ການບໍລິການຂໍ້ມູນຂ່າວສານໃຫ້ຊາວກະສິກອນຍັງບໍ່ທັນທົ່ວເຖີງ ແລະ ພຽງພໍ<br>2. ການພົວພັນກັບກຸ່ມພໍ່ຄ້າເພື່ອຊອກທາງອອກຂອງການຕະຫຼາດໃຫ້ຊາວກະສິກອນຍັງບໍ່ທັນມີ |
| ເມືອງ ວຽງພູຄາ | 1. ກະດານຂ່າວ ແລະ ຂໍ້ມູນທີ່ຕິດໃນກະດານຂ່າວ<br>2. ການເຮັດນາກ້າກີບດຽວ | 1. ເຜີຍແຜ່ຂໍ້ມູນຂ່າວສານອອກສູ່ຊາວກະສິກອນໃຫ້ຫຼາຍ |

| | | |
|---|---|---|
| | 3. ການຊຸກຍູ້ຄອບຄົວຕົວແບບຜະລິດນອກລະດູ ແລະ ໃນລະດູ<br>4. ການຈັດຕະຫຼາດນັດຂອງບ້ານ | 2. ແບ່ງຄວາມຮັບຜິດຊອບແລະກິດຈະກຳແລະຂໍ້ມູນຂ່າວສານ<br>3. ສ້າງໂຄງຮ່າງການຈັດຕັ້ງແລະໜ້າທີ່ພາລະບົດບາດຂອງສູນ<br>4. ສູນພົວພັນກັບພໍ່ຄ້າຊອກຕະຫຼາດໃຫ້ຊາວກະສິກອນ<br>5. ລະບົບການຈັດຕັ້ງຄວນມອບສິດໃຫ້ຂາດຕົວ(ຫົວໜ້າສູນ)<br>6. ຄວນມີພື້ນຜະລິດ ຫຼື ການກະຈາຍຂໍ້ມູນຂ່າວສານໃນຕະຫຼາດນັດ<br>7. ກິດຈະກຳພາຍໃນສູນຄວນມີແຜນການຟື້ນຟູໃໝ່<br>8. ສ້າງກອງທຶນຢາປິ່ນປົວສັດ<br>9. ສ້າງກອງທຶນບໍລິຫານພາຍໃນສູນ<br>10. ສ້າງໃຫ້ມີແນວພັນ,ປຸ໋ຍ,ຢາປາບສັດຕູພືດ ( ກອງທຶນໝູນວຽນ ) |

| ຂັ້ນຕອນການປະຊຸມ | ມີຈຸດດີຫຍັງແດ່ | ມີຫຍັງແດ່ທີ່ຈະຕ້ອງໄດ້ປັບປຸງ | ຄຳເຫັນອື່ນມີຫຍັງແດ່ |
|---|---|---|---|
| **ຂັ້ນຕອນທີ່ 1 :**<br>**ການນຳສະເໜີພາລະບົດບາດ ແລະ ໜ້າທີ່ຄວາຮັບຜິດຊອບ ແລະ** | • ໄດ້ຮຽນຮູ້ປະສົບການຈາກການສົນທະນາແລກປ່ຽນຄຳຄິດຄຳເຫັນຂອງເມືອງອື່ນໆ | • ການນຳສະເໜີສັ້ນເກີນໄປ<br>• ການໃຊ້ຄຳສັບກ້ວາງ | • ການນຳສະເໜີແມ່ນໄລຍະເວລາອັນສັ້ນ<br>• ການຝຶກອົບຮົມຕ້ອງມີບົດຂອງ |

| | | | |
|---|---|---|---|
| **ການສົນທະນາ/ການເຮັດວຽກຂອງກຸ່ມ** | • ການອະທະບາຍລະອຽດດີ ແລະ ມີການສົນ ທະນາເປັນກຸ່ມ<br>• ມີການກະກຽມຂໍ້ມູນການຝຶກອົບຮົມຢ່າງລະອຽດ<br>• ມີຕາຕະລາງເວລາທີ່ກຳນົດຢ່າງຈະແຈ້ງ<br>• ເຮັດໃຫ້ຜູ້ຟັງເຂົ້າໃຈໄດ້ດີ<br>• ທຸກໆຄົນແມ່ນມີການສົນທະນາກັນໃນກອງປະຊຸມ<br>• ແມ່ນມີຄວາມເຂົ້າໃຈຫຼາຍຂື້ນ<br>• ມີການຈັດຕັ້ງ ແລະ ການຄຸ້ມຄອງກຸ່ມ<br>• ການນຳສະເໜີພາລະບົດບາ ແລະ ໜ້າທີ່ຄວາມຮັບຜິດຊອບ ການສົນທະນາ ການເຮັດວຽກເຫັນວ່າດີສົມຄວນເຊັ່ນ:ຈະແຈ້ງ ແລະ ເຂົ້າໃຈດີ<br>• ມີສ່ວນຮ່ວມໃນການແບ່ງປັນພາລະບົດບາດ ແລະ ຄວາມຮັບຜິດຊອບໃນການສົນທະນາ<br>• ແມ່ນມີປື້ມ ແລະ ເອກະສານແຈກຢາຍໃຫ້ແຕ່ລະຄົນ<br>• ມີການບ່ງກຸ່ມຄົ້ນຄ້ວາສົນທະນາ<br>• ສາມາດກຳນົດສິດ,ໜ້າທີ່ ແລະ ການ | ເກີນໄປ | ສະບັບຮ່າງມາໃຫ້ອ່ານ ຫຼື ສຶກສາກ່ອນ |

| | | | |
|---|---|---|---|
| | ແບ່ງຄວາມຮັບຜິດຊອບຂອງ ພະນັກງານ<br>• | | |
| **ຂັ້ນຕອນ 2 :**<br>**ການລົງຢັ້ງມຢາມພາກສະໜາມເບິ່ງກິດຈະກຳຂອງສູນບໍລິການເຕັກນິກ** | • ໄດ້ເຫັນກິດຈະກຳກັບທີ່<br>• ມີກິດຈະກຳພາຍໃນສູນ<br>• ການລົງເບິ່ງກິດຈະກຳແມ່ນເຮັດໃຫ້ໄດ້ບົດ ຮຽນຫຼາຍຢ່າງ,ໄດ້ເຫັນ ແລະ ໄດ້ສຳພາດ<br>• ພະນັກງານສູນ ແລະ ຊາວກະສິກອນ ໃຫ້ ການຕ້ອນຮັບຢ່າງອົບອຸ່ນ<br>• ຊາວກະສິກອນໃຫ້ຄວາມສົນໃຈ ແລະ ເອົາໃຈໃສ່ຕໍ່ກິດຈະກຳຫຼາຍ<br>• ໄດ້ຮຽນຮູ້ຫຼາຍຢ່າງກ່ຽວກັບເຕັກນິກວິທີການ ,ກິດຈະກຳ ແລະ ຄວາມເປັນມາຂອງສູນ<br>• ເໝາະສົມຕໍ່ການລົງຖອດຖອນບົດຮຽນ<br>• ພະນັກງານຢູ່ສູນ ແລະ ຊາວກະສິກອນແມ່ນໄດ້ມີສ່ວນຮ່ວມດີ<br>• ໄດ້ມີການແບ່ງຄວາມຮັບຜິດຊອບໃຫ້ພະ ນັກງານໃນສູນ<br>• ການຈັດຕັ້ງກຸ່ມລ້ຽງສັດແມ່ນມີການວາງແຜນຮ່ວມກັບຊາວກະສິກອນ | • ການສຳພາດພ/ງຂອງສູນຄວນໃຫ້ຢູ່ຄົບ ເພື່ອສຳພາດເຂົາເຈົ້າ ຈະມີຂໍ້ຄິດເຫັນຫຼາຍໆ<br>• ກິດຈະກຳພາຍໃນສູນແມ່ນຍັງບໍ່ເປັນລະບົບ<br>• ແຜນວາດໂຄງຮ່າງການຈັດຕັ້ງ<br>• ການຄຸ້ມຄອງທືນ | • ຄວນມີໂຄງຮ່າງການຈັດຕັ້ງໄວ້ພາຍໃນສູນ<br>• ຈັດວິຊາການຕື່ມໃຫ້ຖືກຕາກິດຈະກຳຂອງຊາວກະສິກອນ(ພະນັກງານສະເພາະດ້ານ) |

| | | | |
|---|---|---|---|
| | ໄດ້ດີ<br>• ການຈັດຕັ້ງກຸ່ມ ແລະ ການໝູນວຽນແນວພັນງົວແມ່ນເຮັດໄດ້ດີ<br>• | | |
| **ຂັ້ນຕອນ 3 :**<br>**ແບບແຜນວິທີເຮັດວຽກ** | • ເຫັນໄດ້ແບບແຜນວິທີການເຮັດວຽກຂອງພະນັກງານສູນ ແລະ ມີການປະສານສົມທົບກັບພາກສ່ວນຕ່າງໆ<br>• ມີການວາງແຜນຮ່ວມກັບຊາວກະສິກອນໃນແຕ່ລະເດືອນແມ່ນເຮັດໄດ້ດີ<br>• ມີການແບ່ງໜ້າທີ່ຄວາມຮັບຜິດຊອບຂອງພະ ນັກງານຕາມວິຊາສະເພາະ<br>• ມີການປະສານງານກັບ 5 ຂະແໜງການ<br>• ແບບແຜນການເຮັດວຽກລະອຽດດີ ແລະ ເຮັດໄດ້ດີເທົ່າທີ່ຄວນ<br>• ມີການເຮັດວຽກເປັນກຸ່ມ<br>• ພະນັກງານແຕ່ລະເມືອງມີການວາງແຜນວິທີເຮັດວຽກ(ການເຮັດວຽກເປັນລະບົບ)<br>• ມີການຕິດຕໍ່ພົວພັນກັບຂະແໜງການທີ່ກ່ຽວຂ້ອງໄດ້ດີ | • ລະບົບການຈັດຕັ້ງ ( ແຜນການວິທີການເຮັດວຽກ ແລະ ນຳສະເໜີແມ່ນຍັງບໍ່ຈະແຈ້ງ)<br>• ການສົນທະນາຄວນໃຫ້ມີບັນຍາກາດຕື່ມ (ມີເກມຫຼີ້ນຊວນຫົວ) | • ຄວນມີຮູບພາບ,ຊີດີ<br>• ໃຫ້ມີກະດານຂ່າວ,ສະຖານທີ່ຂໍ້ມູນຂ່າວສານ,ແຜ່ນພັບ<br>• ໃຫ້ມີຜູ້ຮັບຜິດຊອບຂໍ້ມູນຂ່າວສານ<br>• ແບບແຜນວິທີເຮັດວຽກຍັງບໍ່ທັນໜັກແໜ້ນ |

| | | | |
|---|---|---|---|
| | • ໄດ້ແບ່ງໜ້າທີ່ຮັບຜິດຊອບໃຫ້ແຕ່ລະຄົນເບິ່ງຕາມກິດຈະກໍາຢ່າງລະອຽດ | | |
| **ຂັ້ນຕອນ 4 :**<br>- **ສະຖານທີ່ຂໍ້ມູນຂ່າວສານ**<br>- **ບັນຍາກາດ,ອາຫານ,ທີ່ພັກອາໄສ**<br>- **ວາລະກອງປະຊຸມ ແລະ ສິ່ງເອື້ອອໍານວຍຄວາມສະດວກ** | • ບັນຍາກາດ,ອາຫານ,ທີ່ພັກອາໄສແມ່ນດີພໍສົມຄວນ<br>• ສະຖານທີ່ຂໍ້ມູນຂ່າວສານເຫັນວ່າເປັນລະບົບດີ<br>• ມີການສ້າງບັນຍາກາດ, ມີຄວາມສາມັກຄີດີ ແລະ ມີຄວາມພາກພູມໃຈຫຼາຍ<br>• ມີກະດານຂ່າວ,ມີຖົງປັນຍາ<br>• ຂໍ້ມູນຂ່າວສານຈະແຈ້ງ ວ່ອງໄວດີ<br>• ອາຫານການກິນພຽງພໍດີ ແລະ ບ່ອນພັກອາໄສອົບອຸ່ນ<br>• ຊາວກະສິກອນສາມາດຮູ້ເຖິງແຜນເຕັກນິກ ແລະ ກິດຈະກໍາທີ່ຕົນເອງໄດ້ປະຕິບັດ<br>• ວາລະກອງປະຊຸມດີທຸກຢ່າງ ທາງດ້ານອຸປະກອນ ບ່ອນຮັບໃຊ້ ແລະ ສະໜອງຄວາມຮູ້ແລກປ່ຽນກັນດີ<br>• ພະນັກງານພາຍໃນສູນແມ່ນໄດ້ສະໜອງຂໍ້ມູນຂ່າວສານໃຫ້ແກ່ຊາວ | • ສະຖານທີ່ຄັບແຄບ(ຫ້ອງປະຊຸມ)<br>• ທີ່ພັກແມ່ນຫຍຸ້ງຍາກ<br>• ອາຫານການກິນ | • ການສ້າງບັນຍາກາດມ່ວນຊື່ນຄວນມອບໃຫ້ແຕ່ລະເມືອງ ແລະ ພາກສ່ວນອື່ນໆປະກອບສ່ວນໃຫ້ຫຼາຍຂື້ນຕື່ມ<br>• ການຮ້ອງເພງ,ການສ້າງບັນຍາກາດໃນວາລະກອງປະຊຸມອາດຈະເປັນການເລົ່ານິທານຫຍໍ້ໃຊ້ເວລາ 1-3 ນາທີ<br>• ເຫັນວ່າຢາກໃຫ້ຊອກຂໍ້ມູນຂ່າວສານດ້ານການຜະລິດກະສິກໍາໃຫ້ຫຼາຍກ່ວາເກົ່າ<br>• ຢາກໃຫ້ມີຜູ້ຮັບຜິດຊອບດ້ານການສ້າງບັນຍາກາດແຕ່ລະໄລຍະເພື່ອສ້າງຄະຕິເຕືອນໃຈໃນເວລາດໍາເນີນກອງປະຊຸມ |

| | | | |
|---|---|---|---|
| | ກະສິກອນ<br>• ສາມາດເຮັດໃຫ້ຊາວກະສິກອນເຂົ້າໃຈໄດ້ດີຂື້ນ<br>• ເປັນຄວາມຮູ້,ແນວຄວາມຄິດໃໝ່ສໍາລັບວິທີການເຂົ້າຫາຖ່າຍທອດເຕັກນິກສູ່ຊາວກະສິກອນ<br>• ແມ່ນເຮັດໃຫ້ພະນັກງານແຕ່ລະເມືອງຮູ້ຈັກກັນດີຂື້ນ ແລະ ມີການເອື້ອອໍານວຍຄວາມສະດວກດີ | | |